# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-30 ເມສາ 2024
ປີທີ 13
ສະບັບທີ 967
ລາຍສັປປະດາ


## ຮອງປະທານ ສພຊ ຕິດຕາມກວດກາວຽກງານ ໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ



(ສພຊ) - ວັນທີ 22 ເມສາ 2024, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ) ທັງເປັນປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ຢູ່ແຂວງຈຳປາສັກ ໂດຍໄດ້ເປີດກອງປະຊຸມເຮັດວຽກຮ່ວມກັບຫຼາຍພາກສ່ວນຂອງແຂວງ ເຊິ່ງມີທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງ (ສພຂ) ຈຳປາສັກ, ບັນດາທ່ານຮອງປະທານ ສພຂ, ຕາງໜ້າຈາກບັນດາພະແນກການຂອງອົງການປົກຄອງແຂວງ, ຂົງເຂດຕຸລາການ, ສາມອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນວາລະດຳເນີນກອງປະຊຸມ, ຫຼັງຈາກທ່ານສາຍທອງ ໄຊຍະວົງ ໄດ້ລາຍງານຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໂດຍຍົກໃຫ້ເຫັນຜົນສຳເລັດຫຼາຍດ້ານ ແລະ ທິດທາງແຜນການທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ;

ອ່ານຕໍ່ໜ້າ 2

## ສະພາແຫ່ງຊາດ ສະຫຼຸບຕີລາຄາ ການເຄື່ອນໄຫວວຽກງານກວດກາ ປະຈຳປີ 2023



(ສພຊ) - ເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາຂອງຄະນະກວດກາພັກ-ລັດ ສະພາແຫ່ງຊາດ (ສພຊ) ປະຈຳປີ 2023 ແລະ ກຳນົດທິດທາງແຜນການປະຈຳປີ 2024; ເພື່ອເຮັດໃຫ້ຄະນະພັກຮາກຖານ, ຄະນະໜ່ວຍພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ພາຍໃນ ສພຊ ໄດ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນເນື້ອໃນວຽກງານກວດກາ, ຫັນມາເປັນແຜນວຽກຂອງຕົນ ແລະ ຈັດຕັ້ງປະຕິບັດວຽກງານຕົວຈິງໃນແຕ່ລະໄລຍະ, ຮັບປະກັນບົດບາດອິດທິພົນໃນການນຳພາຂອງພັກ

ອ່ານຕໍ່ໜ້າ 2

## ກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍອາກອນມູນຄ່າເພີ່ມ



(ສພຊ) - ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ໃຫ້ມີການຄົ້ນຄວ້າທີ່ເລິກເຊິ່ງ, ຈະແຈ້ງ; ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນທີ່ສປປລາວເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ທັງເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການສ້າງແລະປັບປຸງກົດໝາຍກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕົກລົງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX.

ໃນວັນທີ 23 ເມສາ 2024 ທີ່ສະພາແຫ່ງຊາດ, ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການພາຍໃນ ສພຊ, ທີ່ປຶກສາທາງດ້ານກົດໝາຍ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ ແລະ ກະຊວງ-ອົງການທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງບົດສະເໜີການປັບປຸງຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ຈາກທ່ານ ພູວົງ ກິດຕະວົງ ຮອງລັດຖະມົນຕີກະຊວງການເງິນ; ຫຼັງຈາກນັ້ນ,

ອ່ານຕໍ່ໜ້າ 2

## ສືບຕໍ່ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຮ່າງກົດໝາຍການສົ່ງເສີມການລົງທຶນ




(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 25-26 ເມສາ 2024 ທີ່ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ໂດຍການເປັນປະທານຂອງທ່ານສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ. ເຂົ້າຮ່ວມມີທ່ານປະທານ-ຮອງປະທານກຳມາທິການແຜນການ, ການເງິນແລະການກວດສອບ, ຮອງປະທານກຳມາທິການກົດໝາຍ; ບັນດາທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະ

ອ່ານຕໍ່ໜ້າ 12

## ອົບຮົມການສ້າງຫຼັກສູດ ແລະ ປື້ມຄູ່ມື ເຝິກອົບຮົມ ໃຫ້ພະນັກງານ ສນສ

(ສພຊ) - ລະຫວ່າງວັນທີ 23-25 ເມສາ 2024 ທີ່ແຂວງວຽງຈັນ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໄດ້ຈັດກອງປະຊຸມເຝິກອົບຮົມການສ້າງຫຼັກສູດ ແລະ



ປື້ມຄູ່ມືເຝິກອົບຮົມ ໃຫ້ແກ່ພະນັກງານຂອງຕົນໂດຍການເປັນປະທານຂອງທ່ານ ສົນທະລາ ຫຼ້າສຸກສະໄໝ ຫົວໜ້າ ສນສ; ມີຮອງຫົວໜ້າສະຖາບັນ, ຄະນະສູນ, ວິທະຍາກອນ, ຄະນະພະ

ອ່ານຕໍ່ໜ້າ 12



ຄຸນຄ່າ ... (ໜ້າ 8)


3 ພະຍາດ... (ໜ້າ 9)


ປະທານາທິບໍດີ... (ໜ້າ 10)



ມາດຕະການ... (ໜ້າ 12)


**ຂໍ່ານັບຮັບຕ້ອນວັນກຳມະກອນສາກົນ ຄົບຮອບ 138 ປີ (01 ພຶດສະພາ 1886 - 01 ພຶດສະພາ 2024)**

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ແລະການຄຸ້ມຄອງຂອງລັດ ແນໃສ່ເຮັດໃຫ້ວຽກງານກວດກາມີບາດກ້າວຫັນປ່ຽນຢ່າງຈະແຈ້ງ ແລະ ສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານ.

ໃນຕອນເຊົ້າວັນພຸດທີ 24 ເມສາ 2024 ທີ່ສະພາແຫ່ງຊາດ, ໄດ້ມີກອງປະຊຸມສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງຄະນະກວດກາພັກ-ລັດ ສພຊ ໂດຍການເປັນປະທານຂອງສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ປະທານກວດກາພັກ-ລັດສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ພ້ອມດ້ວຍຄະນະກົມ, ສູນ, ຫ້ອງການ, ພະແນກ ແລະ ອົງການຈັດຕັ້ງມະຫາຊົນພາຍໃນ ສພຊ.

ສະຫາຍ ຄຳໃບ ດຳລັດ ໄດ້ກ່າວວ່າ: ປີ 2023 ຜ່ານມາ, ຄະນະກວດກາພັກ-ລັດ ສະພາແຫ່ງຊາດ ໄດ້ຕັ້ງໜ້າບຸກບືນປະຕິບັດວຽກງານຕິດຕາມ-ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ຄົ້ນຄວ້າແກ້ໄຂຄຳຮ້ອງຄຳສະເໜີ ແລະ ປັບປຸງການຈັດຕັ້ງຢູ່ຂັ້ນຂອງຕົນມີຜົນສຳເລັດຫຼາຍດ້ານ; ພ້ອມກັນນັ້ນ, ກໍຍັງມີດ້ານອ່ອນ ແລະ ຂໍ້ຄົງຄ້າງຫຼາຍປະການ. ສະນັ້ນ, ກອງປະຊຸມໃນເທື່ອນີ້ ຈະໄດ້ພ້ອມກັນຍົກໃຫ້ເຫັນດ້ານດີ, ບົດຮຽນທີ່ຕ້ອງເສີມຂະຫຍາຍ, ຊອກໃຫ້ເຫັນດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ ເພື່ອປັບປຸງແກ້ໄຂໃນຕໍ່ໜ້າເປັນຕົ້ນແມ່ນວຽກງານຕິດຕາມກວດກາພາຍໃນພັກ, ການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ; ພ້ອມກັນນັ້ນ, ຕ້ອງຄົ້ນຄວ້າປະກອບຄຳຄິດຄຳເຫັນໃຫ້ເລິກເຊິ່ງ, ເປັນເອະພາບຕໍ່ທິດທາງ, ໜ້າທີ່ ແລະ ບັນດາວຽກທີ່ຕ້ອງສຸມໃສ່ຈັດຕັ້ງປະຕິບັດ ໃນປີ 2024 ແນໃສ່ເຮັດໃຫ້ວຽກງານຕິດຕາມ-ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຢູ່ພາຍໃນສະພາແຫ່ງຊາດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ມີການຫັນປ່ຽນດີຂຶ້ນກວ່າເກົ່າ ແລະ ບັນລຸຕາມລະດັບຄາດໝາຍທີ່ວາງໄວ້.

ໃນກອງປະຊຸມ, ໄດ້ຮັບຟັງບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ຂອງຄະນະກວດກາພັກ-ລັດ ສະພາແຫ່ງຊາດ; ການເຜີຍແຜ່ເຊື່ອມຊຶມຜົນສຳເລັດກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2023 ເຊິ່ງມີບັນດານິຕິກຳ ຄື: ຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 169/ຄລສພ, ລົງວັນທີ 15 ສິງຫາ 2022 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຕໍ່ການເຄື່ອນໄຫວວຽກງານກວດກາ ແລະ ແກ້ໄຂຜົນການກວດກາ; ຄຳແນະນຳຂອງຄະນະກວດກາສູນກາງພັກ ສະບັບເລກທີ 285/ຄກສພ, ລົງວັນທີ 15 ກັນຍາ 2023 ກ່ຽວກັບການກະກຽມ ແລະດຳເນີນຊີວິດການເມືອງທ້າຍສະໄໝກອງປະຊຸມໃຫຍ່3ຂັ້ນຂອງພັກ.

**(ຂ່າວ: ນາງ ສຸພາວັນ ຫອມສະນິດ, ພາບ: ສອນສັກ ວັນວິໄຊ;)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກໍໄດ້ສະເໜີຈຸດປະສົງ ແລະ ເຈາະຈີ້ມບາງບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ເພື່ອໃຫ້ຕາງໜ້າພະແນກການແລະພາກສ່ວນກ່ຽວຂ້ອງຂອງແຂວງລາຍງານ ພ້ອມທັງຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ແລະ ສະເໜີວິທີຈັດຕັ້ງປະຕິບັດໃນຕໍ່ໜ້າເຊິ່ງບັນດາທ່ານທີ່ເຂົ້າຮ່ວມໄດ້ສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນຢ່າງມີຈຸດສຸມ ແລະ ສ້າງສັນ. ຈາກນັ້ນ, ທ່ານ ອຳໄພ ຈິດມານິນ ຮອງປະທານກຳມາທິການກົດໝາຍ ໄດ້ເຜີຍແຜ່ຄຳສັ່ງແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ, ລົງວັນທີ 03 ມັງກອນ 2024 ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ເພື່ອໃຫ້ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມນຳໄປຈັດຕັ້ງຜັນຂະຫຍາຍໃຫ້ມີຜົນສຳເລັດ.

ໃນຕອນທ້າຍ,ທ່ານຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນສະຫຼຸມຕີລາຄາຄືນແລະຊີ້ນຳຕໍ່ກອງປະຊຸມ ເຊິ່ງສະແດງຄວາມຊົມເຊີຍຕໍ່ທຸກພາກສ່ວນຂອງແຂວງທີ່ໄດ້ມີຄຳເຫັນເຮັດໃຫ້ກອງປະຊຸມຄັ້ງນີ້ດຳເນີນດ້ວຍບັນຍາກາດທີ່ຟົດຟື້ນ, ສ້າງສັນ ແລະ ເຕັມໄປດ້ວຍເນື້ອໃນສຳຄັນ, ເລິກເຊິ່ງຫຼາຍດ້ານ ເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມຈຸດປະສົງທີ່ໄດ້ວາງໄວ້ຢ່າງຈົບງາມ; ເພື່ອສືບຕໍ່ປັບປຸງແກ້ໄຂວຽກງານດັ່ງກ່າວໃຫ້ດີຂຶ້ນກວ່າເກົ່າ, ທ່ານປະທານກຳມາທິການກົດໝາຍ ໄດ້ສະເໜີເນັ້ນຕື່ມ 5 ບັນຫາໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ15, ຄະນະປະຈຳສະພາປະຊາຊົນແຂວງ, ອົງການປົກຄອງແຂວງແລະພາກສ່ວນກ່ຽວຂ້ອງ ສືບຕໍ່ຈັດຕັ້ງປະຕິບັດດັ່ງນີ້:

1. ເອົາໃຈໃສ່ຊີ້ນຳບັນດາຂະແໜງການ ແລະ ອົງການຂອງແຂວງ ເພີ່ມທະວີການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ບັນດາກົດໝາຍທີ່ໄດ້ປະກາດໃຊ້ແລ້ວ ໃຫ້ມີຄວາມວ່ອງໄວ, ຕໍ່ເນື່ອງ, ທັນກຳນົດເວລາ, ກວ້າງຂວາງ ແລະ ເຂົ້າເຖິງທຸກເປົ້າໝາຍ ທັງພາກລັດ, ເອກະຊົນ ແລະ ປະຊາຊົນລາວບັນດາເຜົ່າ ດ້ວຍຫຼາຍຮູບການ, ຫຼາຍວິທີການ; ພິຈາລະນາຈັດສັນງົບປະມານ, ພາຫະນະ ສະໜອງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວຕາມຄວາມສາມາດຕົວຈິງ.

2. ສືບຕໍ່ຊີ້ນຳການຜັນຂະຫຍາຍຄຳສັ່ງຄຳແນະນຳ ສະບັບເລກທີ 01/ຄປຈ, ລົງວັນທີ 03 ມັງກອນ 2024 ຢູ່ແຂວງຈຳປາສັກ ເພື່ອກະກຽມບົດລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ໃຫ້ມີເນື້ອໃນຄົບຖ້ວນ ແລະ ທັນກັບກຳນົດເວລາ.

3. ສືບຕໍ່ຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 29/ຄປຈ, ລົງວັນທີ 07 ກຸມພາ 2022 ແລະ ນິຕິກຳຂອງລັດຖະບານກ່ຽວກັບການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

4. ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ກໍຄືນິຕິກຳໃຕ້ກົດໝາຍ ລວມທັງນິຕິກຳໃຕ້ກົດໝາຍຂອງແຂວງ ໃຫ້ແທດເຖິງຕົວຈິງຕື່ມ ໂດຍສະເພາະນິຕິກຳທີ່ຕິດພັນກັບການອະນຸມັດໂຄງການຕ່າງໆ ເຊິ່ງເຫັນວ່າຍັງມີຫຼາຍບັນຫາ, ຫຼາຍກິດຈະກຳ, ຫຼາຍໂຄງການ ໄດ້ມີນິຕິກຳຄົບຖ້ວນແລ້ວ ແຕ່ຍັງບໍ່ທັນນຳລົງໄປເຜີຍແຜ່ແນະນຳໃຫ້ປະຊາຊົນຮັບຮູ້ເຂົ້າໃຈ, ຜູ້ລົງທຶນບໍ່ເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດ ແລະ ບາງໂຄງການແມ່ນບໍ່ລົງມືພັດທະນາຕາມສັນຍາ ແລະ ອື່ນໆ.

5. ສະເໜີໃຫ້ຄະນະພັກຂັ້ນຕ່າງໆ ເພີ່ມທະວີການນຳພາ-ຊີ້ນຳຕໍ່ການໂຄສະນາເຜີຍແຜ່ ແລະການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃຫ້ເປັນຮູບປະທຳ ແລະ ເປັນຈິງເທື່ອລະກ້າວ.

ການໄປເຄື່ອນໄຫວວຽກງານຂອງທ່ານຮອງປະທານສະພາແຫ່ງຊາດ ແລະ ຄະນະ ໃນຄັ້ງນີ້, ຍັງໄດ້ມອບຄອມພິວເຕີຈຳນວນ 2 ເຄື່ອງ ໃຫ້ແກ່ສະພາປະຊາຊົນແຂວງຈຳປາສັກ ເພື່ອໝູນໃຊ້ເຂົ້າໃນການປະຕິບັດວຽກງານອີກດ້ວຍ.

**(ສົມວິຈິດ ໄຊມິນຕີ)**

## ກວດກາ...

(ຕໍ່ຈາກໜ້າ 1)

ຕາງໜ້າກົມກົດໝາຍ ໄດ້ສະເໜີເນື້ອໃນຂອງຮ່າງກົດໝາຍດັ່ງກ່າວແລະບັນດາຜູ້ເຂົ້າຮ່ວມກໍໄດ້ສຸມໃສ່ຄົ້ນຄວ້າ, ສົນທະນາແລກປ່ຽນ, ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ກົງໄປກົງມາ.

ທ່ານ ສົມມາດ ພົລເສນາ ໄດ້ກ່າວວ່າ: ກອງປະຊຸມໃນຄັ້ງນີ້ ເປັນການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍຢ່າງລະອຽດ, ຮອບດ້ານ ຕິດພັນກັບການຈັດຕັ້ງປະຕິບັດຕົວຈິງ ແນໃສ່ເຮັດໃຫ້ເນື້ອໃນມີຄວາມຄົບຖ້ວນ, ຮັດກຸມ; ຈາກນັ້ນ, ກຳມາທິການກົດໝາຍ ຈະໄດ້ລາຍງານຜົນສຳເລັດຂອງການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍຕໍ່ກອງປະ ຊຸມຄະນະປະຈຳສະພາແຫ່ງຊາດເພື່ອຕົກລົງເອົາໄປທາບທາມຄຳເຫັນກັບບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນໄວໆນີ້.

**(ນາງ ສຸພາວັນ ຫອມສະນິດ)**

## ເລື່ອງເດັ່ນ ຂ່າວເດັດ

***# ຄັດໂດຍ: ຫອມສະນິດ***

*❐ ມາດຕະຖານພົ້ນທຸກ ແລະ ພັດທະນາ ແມ່ນຄວາມຮັບຜິດຊອບລວມຂອງຫຼາຍຂະແໜງການ ເຊິ່ງການປະເມີນສະພາບພົ້ນທຸກ ແລະ ພັດທະນາ ຕາມດຳລັດ 348/ລບ ໄດ້ດຳເນີນມາແຕ່ທ້າຍປີ 2021 ການປະເມີນໄລຍະຕົ້ນສະພາບພົ້ນທຸກ ແລະ ພັດທະນາ ຕາມດຳລັດ 348/ລບ ໄດ້ເກັບກຳຂໍ້ມູນຕົວຈິງ ມີ 1.234.314 ຄອບຄົວ ເທົ່າກັບ 88,17% ຂອງຈຳນວນຄອບຄົວທັງໝົດໃນທົ່ວປະເທດ 1.399.904 ຄອບຄົວ ມີ 8.402 ບ້ານ ເທົ່າກັບ 100% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ 145 ເມືອງ ແລະ 3 ນະຄອນ ເທົ່າກັບ 100% ຂອງຈຳນວນເມືອງ ແລະ ນະຄອນທັງໝົດໃນທົ່ວປະເທດ ຜ່ານການສັງລວມຂໍ້ມູນຜົນການປະເມີນໃນທົ່ວປະເທດ ມີຄອບຄົວພົ້ນທຸກ 976.644 ຄອບຄົວ ກວມເອົາ 79,12% ຂອງຈຳນວນຄອບຄົວທີ່ໄດ້ເກັບກຳຂໍ້ມູນ (ຄອບຄົວທຸກຍາກຍັງເຫຼືອ257.670ຄອບຄົວກວມເອົາ 20,88% ຂອງຈຳນວນຄອບຄົວທີ່ໄດ້ເກັບກຳຂໍ້ມູນ) ມີບ້ານພົ້ນທຸກ 5.438 ບ້ານ ກວມເອົາ 64,72% ຂອງຈຳນວນບ້ານທັງໝົດ (ບ້ານທຸກຍາກຍັງເຫຼືອ 2.964 ບ້ານ ກວມເອົາ 35,28% ຂອງຈຳນວນບ້ານທັງໝົດ) ມີເມືອງພົ້ນທຸກ 64 ເມືອງ ກວມເອົາ 43,24% ຂອງຈຳນວນເມືອງທັງໝົດ (ເມືອງທຸກຍາກຍັງເຫຼືອ 84 ເມືອງ ກວມເອົາ 56,75% ຂອງຈຳນວນເມືອງທັງໝົດ) ມີຄອບຄົວພັດທະນາ 779.119 ຄອບຄົວ ກວມເອົາ 63,12% ຂອງຈຳນວນຄອບຄົວທີ່ໄດ້ເກັບກຳຂໍ້ມູນ ມີບ້ານພັດທະນາ 2.150 ບ້ານ ກວມເອົາ 25,58% ຂອງຈຳນວນບ້ານທັງໝົດ ມີບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ 25 ຈຸດ ແລະ ມີເມືອງເຂັ້ມແຂງຮອບດ້ານເມືອງ ກວມ 4,05% ຂອງຈຳນວນເມືອງທັງໝົດ.*

***ໜສພ. ວຽງຈັນໃໝ່ 03/04/2024***

*❐ ກະຊວງການເງິນ ອອກແຈ້ງການກ່ຽວກັບການຈັດຕັ້ງປະຕິບັດເງິນອຸດໜູນຄ່າຄອງຊີບເພີ່ມ 150.000 ກີບຕໍ່ຄົນຕໍ່ເດືອນ ແລະ ປະຕິບັດນະໂຍບາຍຕໍ່ຄູອາສາສະໝັກ, ພະນັກງານບຳນານແລະທະຫານຊາຍແດນ ເພື່ອຜັນຂະຫຍາຍແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 612/ຫສນຍ, ລົງວັນທີ 25 ມີນາ 2024 ໂດຍໃຫ້ສືບຕໍ່ຮັກສານະໂຍບາຍເງິນເດືອນ ແລະ ເງິນອຸດໜູນທີ່ໄດ້ປະຕິບັດມາແລ້ວ ໃນທ້າຍປີ 2023 ແລະ ເຫັນດີໃຫ້ເພີ່ມເງິນອຸດໜູນຄ່າຄອງຊີບ ໃຫ້ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ຜູ້ເສຍອົງຄະ ໃນປີ 2024 ຕື່ມ ໂດຍເລີ່ມປະຕິບັດໃນງວດ 1 ປີ 2024 ເປັນຕົ້ນໄປ.*

***ໜສພ. ປະເທດລາວ 04/04/2024***

*❐ ສູນສະຖິຕິ ແລະ ຂ່າວສານສາທາລະນະສຸກ ກະຊວງສາທາລະນະສຸກ ໃຫ້ຮູ້ວ່າ: ປັດຈຸບັນຍັງພົບກໍລະນີຕິດເຊື້ອໄຂ້ຍຸງລາຍເກີດຂຶ້ນໃໝ່ໃນແຕ່ລະວັນ ສິ່ງຜົນໃຫ້ນັບແຕ່ຕົ້ນປີ ມາເຖິງປັດຈຸບັນ (4 ເດືອນ) ມີກໍລະນີຕິດເຊື້ອໄຂ້ຍຸງລາຍສະສົມຫຼາຍກວ່າ 2.000 ກໍລະນີ. ໃນວັນທີ 17 ເມສາ 2024 ມີກໍລະນີຕິດ ເຊື້ອໄຂ້ຍຸງລາຍໃໝ່ 9 ກໍລະນີ ແລະ ຕິດເຊື້ອສະສົມທົ່ວປະເທດ 2.216 ກໍລະນີ ເສຍຊີວິດ 3 ຄົນ ໃນນີ້, ແຂວງເຊກອງ 704 ກໍລະນີ, ນະຄອນຫຼວງວຽງຈັນ 431 ກໍລະນີ, ຫຼວງນໍ້າທາ 266 ກໍລະນີ, ຫຼວງພະບາງ 128 ກໍລະນີ, ຜົ້ງສາລີ 103 ກໍລະນີ, ອຸດົມໄຊ 86 ກໍລະນີ,ສະຫວັນນະເຂດ 115 ກໍລະນີ, ວຽງຈັນ 94 ກໍລະນີ, ໄຊຍະບູລີ 64 ກໍລະນີ, ອັດຕະປື 54 ກໍລະນີ, ຄຳມ່ວນ 81 ກໍລະນີ, ບໍລິຄຳໄຊ 55 ກໍລະນີ, ບໍ່ແກ້ວ 13 ກໍລະນີ, ຈຳປາສັກ 12 ກໍລະນີ, ໄຊສົມບູນ 6 ກໍລະນີ, ສ່ວນແຂວງຊຽງຂວາງ ແລະ ຫົວພັນ ບໍ່ພົບກໍລະນີຕິດເຊື້ອ.*

***ໜສພ. ວຽງຈັນໃໝ່ 23/04/2024***

# ຄວາມສາມາດແຂ່ງຂັນຂອງຜູ້ຜະລິດພາຍໃນຍັງຕໍ່າ, ທຶນຮອນສະໜັບສະໜູນມີຈຳກັດ

ທ່ານ ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງເຊກອງ ໄດ້ໃຫ້ສຳພາດເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວບັນຫາທີ່ພົ້ນເດັ່ນ, ເຄັ່ງຮ້ອນຂອງແຂວງ ແລະວິທີແກ້ໄຂບັນຫາວ່າ:

**1.1 ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງ.**

-ການຄຸ້ມຄອງໂຄງການລົງທຶນຂອງລັດ, ໂຄງການລົງທຶນຈາກການຊ່ວຍເຫຼືອທາງການເພື່ອການພັດທະນາບາງໂຄງການຍັງຂາດການຄຸ້ມຄອງຕິດຕາມຢ່າງເປັນລະບົບຮັດກຸມເຮັດໃຫ້ການຈັດຕັ້ງປະຕິບັດໂຄງການຊັກຊ້າແກ່ຍາວ.

- ການສະໜອງງົບປະມານເຂົ້າໃສ່ການລົງທຶນຂອງລັດຍັງຊັກຊ້າ, ບໍ່ທັນຕາມກຳນົດເວລາ, ງົບປະມານທີ່ສະໜອງໃຫ້ແກ່ການລົງທຶນຍັງມີຈຳກັດ ບໍ່ທັນພຽງພໍຖ້າທຽບໃສ່ຄວາມຕ້ອງການໃນການພັດທະນາ ເຮັດໃຫ້ຫຼາຍໂຄງການບໍ່ໄດ້ຮັບການຈັດຕັ້ງປະຕິບັດຕາມແຜນ; ມີການຊັກຊ້າແກ່ຍາວ ເຮັດໃຫ້ປະສິດທິພາບ, ປະສິດທິຜົນຂອງໂຄງການຕໍ່າ.

- ການພັດທະນາຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະຂົງເຂດສຶກສາ-ສາທາລະນະສຸກ ການພັດທະນາວຽກງານຂອງຕົນຍັງບໍ່ທັນໄດ້ເຂັ້ມແຂງໃນເຂດຊົນນະບົດຫ່າງໄກສອກຫຼີກ ເຊິ່ງມັນສະແດງອອກໃນການຈັດຕັ້ງປະຕິບັດຄາດໝາຍຕົວຊີ້ວັດຕ່າງໆຂົງເຂດສຶກສາ, ສາທາລະນະສຸກບາງຄາດໝາຍຢ່ຳເທົ້າຫຼືວ່າມີຄວາມຄືບໜ້າຊ້າ.

-ການພັດທະນາເສດຖະກິດແກ້ໄຂຊີວິດການເປັນຢູ່, ເຖິງວ່າໄດ້ພະຍາຍາມ ແຕ່ຍັງມີຫຼາຍບັນຫາທີ່ຍັງຈະຕ້ອງເອົາໃຈໃສ່ຕື່ມອີກ, ການພັດທະນາພື້ນຖານໂຄງລ່າງດ້ານເສດຖະກິດ-ສັງຄົມຍັງເຫັນບາງຕົວເລກບໍ່ສາມາດບັນລຸຕາມແຜນທີ່ວາງໄວ້, ມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນກໍຄືການປະຕິບັດວາລະແຫ່ງຊາດກ່ຽວກັບບັນຫານີ້, ບໍ່ທັນໄດ້ຮັບຜົນສຳເລັດທີ່ສະແດງອອກເປັນຮູບປະທຳເທົ່າທີ່ຄວນ.

- ການຮັບມືກັບປາກົດການຫຍໍ້ທໍ້ໃນສັງຄົມຍຸກໃໝ່ ຍັງບໍ່ທັນແຂງແຮງເທົ່າທີ່ຄວນໂດຍສະເພາະການຄຸ້ມຄອງການເສບຂ່າວ ແລະການເຄື່ອນໄຫວທາງສື່ສັງຄົມອອນລາຍ, ການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດພວກເຮົາຍັງບໍ່ທັນມີແຜນຮັບມືທີ່ຮັດກຸມ, ວ່ອງໄວ ແລະ ມີປະສິດທິຜົນດີເທື່ອ.

-ການປັບປຸງກົນໄກການປະສານງານ ລະຫວ່າງຂະແໜງການ, ສູນກາງກັບທ້ອງຖິ່ນ ຍັງບໍ່ທັນສະດວກໂລ່ງລ່ຽນ, ການບໍລິການແລະສະໜອງຂໍ້ມູນຍັງບໍ່ທັນຈະແຈ້ງ ເຮັດໃຫ້ການດຶງດູດການລົງທຶນໄດ້ໜ້ອຍ ບໍ່ບັນລຸຕາມແຜນ.

-ບາງພະແນກການ, ອົງການທຽບເທົ່າພາຍໃນແຂວງ ແລະ ເມືອງ ບໍ່ທັນໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ, ການເຮັດໜ້າທີ່ພາລະບົດບາດເປັນເສນາທິການ ໃຫ້ຂັ້ນເທິງຍັງບໍ່ທັນໝົດຕາມພາລະບົດບາດໜ້າທີ່ຄວາມຮັບຜິດຊອບຂອງຕົນ.

- ການຜະລິດເປັນສິນຄ້າບາງປະເພດຍັງບໍ່ທັນເຂັ້ມແຂງ ເນື່ອງຈາກກົນໄກການຊຸກຍູ້ຂອງຂະແໜງການບໍ່ທັນແຂງແຮງເທົ່າທີ່ຄວນ, ບໍ່ທັນມີກຸ່ມການຜະລິດທີ່ເປັນລະບົບເຂັ້ມແຂງ.

-ຄວາມສາມາດແຂ່ງຂັນຂອງຜູ້ຜະລິດພາຍໃນຍັງຕ່ຳ ທຶນຮອນສະໜັບສະໜູນມີຈຳກັດ.

- ການຈັດເກັບລາຍຮັບເຂົ້າງົບປະມານບາງປະເພດລາຍຮັບໄດ້ນ້ອຍ, ການສຳຫຼວດຖານລາຍຮັບໃໝ່ ແລະ ການຫັນເປັນທັນສະໄໝຍັງຊັກຊ້າ.

- ການປະຕິບັດມາດຕະການປະຢັດຕ້ານການຟຸມເຟືອຍຍັງບໍ່ທັນໄດ້ດີເທົ່າທີ່ຄວນ ຫຼືວ່າຍັງຊັກຊ້າ ໂດຍສະເພາະຂົງເຂດການຄຸ້ມຄອງຊັບສິນຂອງລັດ.

-ການແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມຍັງເຮັດບໍ່ທັນໄດ້ດີ ເປັນຕົ້ນ: ບັນຫາຢາເສດຕິດ, ອຸບັດເຫດຕາມທ້ອງຖະໜົນ ເຖິງວ່າພວກເຮົາມີຄວາມພະຍາຍາມສູງໃນຫຼາຍດ້ານ ແຕ່ບັນຫາດັ່ງກ່າວຍັງບໍ່ທັນຖືກແກ້ໄຂຢ່າງຕັ້ງໜ້າ.

**1.2 ວິທີແກ້ໄຂບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງ.**

- ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນຊຸມປີທີ່ຍັງເຫຼືອຮອດທ້າຍສະໄໝ, ໃຫ້ຖອດຖອນບົດຮຽນ 2 ປີເຄິ່ງຜ່ານມາ, ນີ້ກໍເພື່ອສູ້ຊົນປະຕິບັດບາງຕົວເລກບໍ່ສາມາດບັນລຸຕາມແຜນທີ່ວາງໄວ້,



ປັບປຸງວາງຕົວເລກຄາດໝາຍສູ້ຊົນທ້າຍສະໄໝໃຫ້ສອດຄ່ອງກັບເງື່ອນໄຂທ່າແຮງບົ່ມຊ້ອນ ແລະ ຄວາມອາດສາມາດຕົວຈິງຂອງທ້ອງຖິ່ນ, ອັນໃດຄວນຍູ້ແຮງສິ່ງເສີມຕື່ມ, ຄວນແກ້ໄຂອັນໃດ ໃນນັ້ນ, ຕ້ອງເອົາໃຈໃສ່ຂຸດຄົ້ນທ່າແຮງບົ່ມຊ້ອນພາຍໃນແຂວງ, ການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໂດຍມີການອຳນວຍຄວາມສະດວກ, ຄຸ້ມຄອງໃຫ້ໄປຕາມກົດໝາຍ ແລະລະບຽບການ; ພ້ອມກັນຕິຖອຍສະພາບເອື່ອຍອີງໃສ່ການລົງທຶນຈາກງົບປະມານຂອງລັດ, ຕ້ອງຊ່ວຍກັນຊຳລະແກ້ໄຂໜີ້ເກົ່າ ແລະ ຄຸ້ມຄອງການເງິນພາກລັດແບບໃໝ່ຢ່າງບຸກທະລຸ ແລະ ສ້າງໄດ້ການຫັນປ່ຽນໃໝ່ ທີ່ເຂັ້ມແຂງ ໃນນັ້ນ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ຕິດພັນກັບການປະຕິບັດສອງວາລະແຫ່ງຊາດ ໂດຍສະເພາະບັນດາວຽກຈຸດສຸມຕ່າງໆ, ລົງເລິກຊອກຫາສາເຫດຄວາມຫຍຸ້ງຍາກເພື່ອຄົ້ນຄວ້າວິທີການ ແລະ ມາດຕະການແກ້ໄຂບັນດາຂໍ້ຄົງຄ້າງ, ສິ່ງທີ່ຍັງບໍ່ສາມາດປະຕິບັດ ໃຫ້ບັນລຸຕາມຄາດໝາຍໄດ້; ຕ້ອງເອກະພາບສູງ ແລະ ໄປລວງດຽວກັບທິດທີ່ສູນກາງພັກ, ລັດຖະບານວາງອອກ, ບໍ່ລັງເລທໍ້ຖອຍ, ຕ້ອງເດັດດ່ຽວເຮັດແທ້ທຳຈິງ, ຕ້ອງຖືເອົາວຽກງານດັ່ງກ່າວ ເປັນບັ້ນຮົບສຳຄັນ, ຕ້ອງຍົກສູງຄວາມຮັບຜິດຊອບ ແລະຄວາມສາມາດຂອງຄະນະພັກແຕ່ລະຂັ້ນ ໃນການນຳພາ-ຊີ້ນຳຈັດຕັ້ງປະຕິບັດໃຫ້ເຂົ້າສູ່ຕົວຈິງຢ່າງແຂງແຮງ, ເຮັດໃຫ້ມີການຫັນປ່ຽນທີ່ເປັນຮູບປະທຳແທ້, ຕ້ອງເຮັດໃຫ້ການຈັດຕັ້ງປະຕິບັດວາລະແຫ່ງຊາດກາຍເປັນພັນທະໜ້າທີ່, ເປັນຄວາມຮັບຜິດຊອບຂອງທົ່ວລະບົບການເມືອງ ແລະ ຂອງໝົດທຸກພາກສ່ວນໃນສັງຄົມຢ່າງແທ້ຈິງ.

- ສຳລັບດ້ານການເງິນ-ງົບປະມານ, ກ່ອນອື່ນ ແມ່ນຕ້ອງເພີ່ມທະວີການຄຸ້ມຄອງແຜນການ-ການເງິນ ຕາມກົນໄກທີ່ເຂັ້ມງວດ, ໂປ່ງໃສ, ອັດການຮົ່ວໄຫຼຂອງງົບປະມານ ແລະ ປະຕິບັດວິໄນແຜນການ-ການເງິນຢ່າງເຄັ່ງຄັດ, ຖ້າບໍ່ສາມາດປະຕິບັດໄດ້ຄືດັ່ງກ່າວ ເຖິງຫາມາໄດ້ຫຼາຍເທົ່າໃດ ກໍບໍ່ມີອັນສະສົມເພື່ອການພັດທະນາແຂວງ ກໍຄືພັດທະນາທ້ອງຖິ່ນ, ເສດຖະກິດ-ສັງຄົມ, ແກ້ໄຂຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນເຜົ່າພາຍໃນແຂວງ.

- ໃນເງື່ອນໄຂ ແລະປັດໄຈໃໝ່ໃນການເຊື່ອມຈອດພາກພື້ນ ແລະ ການຂົນສົ່ງທາງບົກອື່ນໆ, ແຂວງເຊກອງ ໄດ້ມີແຜນການຟື້ນຟູ ແລະ ພັດທະນາເສັ້ນທາງໂຮ່ຈີ່ມິງຜ່ານແຂວງ ແລະ ເປີດດ່ານທ້ອງຖິ່ນ ເພື່ອເປັນການກະຕຸ້ນເສດຖະກິດ, ສືບຕໍ່ຍູ້ແຮງການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຂະຫຍາຍແຫຼ່ງລາຍຮັບໃຫ້ຫຼາຍກວ່າເກົ່າ, ໄປຄຽງຄູ່ກັບເງື່ອນໄຂສະດວກຫຼາຍດ້ານຂອງແຂວງ ຕ້ອງມີນະໂຍບາຍທີ່ເອື້ອອຳນວຍຄວາມສະດວກຕໍ່ການລົງທຶນ ແລະ ການໄປມາຄ້າຂາຍໃຫ້ຫຼາຍ ດ້ວຍການກຳນົດນະໂຍບາຍທີ່ສອດຄ່ອງ, ພ້ອມທັງສືບຕໍ່ເນັ້ນການລົງທຶນໃນຂະແໜງອຸດສາຫະກຳປຸງແຕ່ງ ຕິດພັນກັບຂະແໜງກະສິກຳທີ່ເປັນມູນເຊື້ອ ແລະ ກະສິກຳສະອາດ; ໄປຄຽງຄູ່ກັບການຊຸກຍູ້ສົ່ງເສີມການທ່ອງທ່ຽວ ທີ່ມີທ່າແຮງ ແລະ ມີຊື່ສຽງຂອງແຂວງ ໃຫ້ກາຍເປັນຂະແໜງການສົ່ງອອກກັບທີ່ ທີ່ແຂງແຮງກວ່າເກົ່າ, ໃຫ້ຍູ້ແຮງການຜະລິດສິນຄ້າທີ່ເປັນທ່າແຮງ ເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກໃຫ້ຫຼາຍ.

- ສືບຕໍ່ເອົາໃຈໃສ່ການພັດທະນາດ້ານວັດທະນະທຳ-ສັງຄົມ ໄປຄຽງຄູ່ກັບການພັດທະນາທາງດ້ານເສດຖະກິດ, ສຸມໃສ່ປະຕິບັດບັນດາຄາດໝາຍຕົວຊີ້ວັດການພັດທະນາແບບຍືນຍົງ ເປັນຕົ້ນແມ່ນດ້ານການສຶກສາ, ສາທາລະນະສຸກ ໂດຍຕ້ອງສຸມໃສ່ຕົວຊີ້ວັດໃນວຽກງານສຶກສາ ແລະ ສາທາລະນະສຸກທີ່ບໍ່ທັນບັນລຸ ໄປພ້ອມໆກັບການຍົກສູງຄວາມຮັບຜິດຊອບ, ຈັນຍາບັນ, ຈັນຍາທຳຂອງພະນັກງານ-ລັດຖະກອນ ແລະ ການຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ໃນຂົງເຂດດັ່ງກ່າວນີ້ ໃຫ້ສູງຂຶ້ນກວ່າເກົ່າ; ສືບຕໍ່ເສີມຂະຫຍາຍ ແລະ ພັດທະນາການທ່ອງທ່ຽວ, ວັດທະນະທຳ, ຮັກສາ ແລະເສີມຂະຫຍາຍຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ ເປັນຕົ້ນບຸນປະເພນີຂອງແຕ່ລະເຜົ່າ ເພື່ອເປັນແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳທີ່ເປັນມູນເຊື້ອເອກະລັກຂອງທ້ອງຖິ່ນ; ພ້ອມກັນນັ້ນ ກໍປົກປັກຮັກສາແຫຼ່ງທ່ອງທ່ຽວທາງທຳມະຊາດ ຕິດພັນກັບການພັດທະນາແຫຼ່ງທ່ອງທ່ຽວກະສິກຳ; ເອົາໃຈໃສ່ຄຸ້ມຄອງແຮງງານຕ່າງປະເທດໃຫ້ເຂົ້າສູ່ກົດໝາຍ, ລະບຽບການ, ສ້າງພົນລະເມືອງໃຫ້ມີວຽກເຮັດງານທຳ, ສ້າງເງື່ອນໄຂໃຫ້ລູກຫຼານຂອງປະຊາຊົນ ໃຫ້ມີສ່ວນຮ່ວມເຂົ້າເຮັດວຽກນຳໂຄງການຕ່າງໆທີ່ມີຢູ່ໃນທ້ອງຖິ່ນ, ເພື່ອສ້າງວຽກເຮັດງານທຳແກ້ໄຂຄວາມທຸກຍາກ, ແກ້ໄຂສະພາບໄພຫວ່າງງານ ແລະ ການໜີໄປອອກແຮງງານຢູ່ຕ່າງປະເທດທີ່ບໍ່ຖືກກົດໝາຍ, ຫຼີກເວັ້ນບໍ່ມີຂໍ້ຂັດແຍ່ງລະຫວ່າງຜູ້ລົງທຶນກັບປະຊາຊົນ ອັນຈະເປັນຊ່ອງວ່າງໃຫ້ກຸ່ມຄົນບໍ່ດີສວຍໂອກາດທຳລາຍມ້າງເພຄວາມສາມັກຄີພາຍໃນພັກ, ເຮັດໃຫ້ປະຊາຊົນຂາດຄວາມເຊື່ອໝັ້ນສັດທາຕໍ່ການນຳພາຂອງພັກ-ລັດພວກເຮົາ.

- ສືບຕໍ່ເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງຕັ້ງໜ້າ, ເພີ່ມທະວີການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມທີ່ເກີດຂຶ້ນຢູ່ແຂວງ ເປັນຕົ້ນບັນຫາຢາເສບຕິດ, ການລັກລອບຂຸດຄົ້ນຊັບພະຍາກອນທຳມະຊາດ, ສະພາບຫຍໍ້ທໍ້ໃນສັງຄົມ ໂດຍສະເພາະການຄຸ້ມຄອງການບໍລິໂພກຂ່າວ ແລະ ການເຄື່ອນໄຫວທາງສື່ສັງຄົມອອນລາຍ ທີ່ຍັງຄວບຄຸມໄດ້ຍາກ, ການເຄື່ອນໄຫວສາສະໜາທີ່ບໍ່ຖືກຕ້ອງ ແລະອື່ນໆ; ຕ້ອງມີມາດຕະການແກ້ໄຂຕໍ່ຂະບວນການຫຼິ້ນກິນຟຸມເຟືອຍ, ຫຼິ້ນການພະນັນທີ່ເກີດຂຶ້ນໃນສັງຄົມ ບໍ່ໃຫ້ແຜ່ລາມ ເພື່ອຈຳກັດປາກົດການຫຍໍ້ທໍ້ໃນຄອບຄົວ ແລະ ສັງຄົມ. ຖືການແກ້ໄຂບັນຫາຢາເສບຕິດ ເປັນແຜນວຽກບູລິມະສິດສຳຄັນໜຶ່ງຂອງແຂວງ, ເປັນໜ້າທີ່ຄວາມຮັບຜິດຊອບ ທັງເປັນພາລະກິດທົ່ວປວງຊົນ; ສືບຕໍ່ປັບປຸງ ແລະ ກໍ່ສ້າງກຳລັງທ້ອງຖິ່ນໃຫ້ເຂັ້ມແຂງໃນທຸກດ້ານ ເປັນຕົ້ນແມ່ນການສ້າງທ່າສະໜາມ ປກຊ-ປກສ, ການສ້າງກຳລັງກອງຫຼອນ, ປກສ ບ້ານ ແລະ ກຳລັງສຳຮອງ ໃຫ້ໜັກແໜ້ນເຂັ້ມແຂງ, ປຸກລະດົມຍົກສູງສະຕິເປັນເຈົ້າຂອງປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມທິດ "ປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ພາຍໃຕ້ການນຳພາຢ່າງເດັດຂາດ, ໂດຍກົງຂອງພັກເຮົາ;

- ສືບຕໍ່ເສີມຂະຫຍາຍບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ, ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ໃນການປະຕິບັດໜ້າທີ່ຕິດຕາມກວດກາ, ຊຸກຍູ້ການປະຕິບັດໜ້າທີ່ຂອງບັນດາອົງການລັດ ຕາມລັດຖະທຳມະນູນ, ກົດໝາຍ, ຂໍ້ຕົກລົງ ຂອງເຈົ້າແຂວງ ກ່ຽວກັບບັນຫາຕ່າງໆທີ່ສະພາປະຊາຊົນແຂວງຮັບຮອງໃຫ້ທົ່ວເຖິງ, ເປັນການປະກອບສ່ວນສຳຄັນໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ໃຫ້ນັບມື້ດີຂຶ້ນ ເພື່ອເຮັດສຳເລັດຕາມບົດບາດ, ໜ້າທີ່ດັ່ງກ່າວນັ້ນ, ຂ້າພະເຈົ້າເຊື່ອໝັ້ນວ່າ ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ຈະຕ້ອງໄດ້ສືບຕໍ່ຍົກສູງຂີດຄວາມສາມາດໃຫ້ໄປຕາມສິດ ແລະ ໜ້າທີ່ ທີ່ກົດໝາຍໄດ້ກຳນົດໄວ້, ສ້າງຄວາມເຊື່ອໝັ້ນສັດທາຂອງປະຊາຊົນຕໍ່ການນຳພາຂອງພັກ ແລະການຄຸ້ມຄອງຂອງລັດ ໃນແຕ່ລະຂັ້ນໃຫ້ສູງຂຶ້ນ.

ທ່ານຍັງໃຫ້ຮູ້ຕື່ມກ່ຽວກັບຜົນສຳເລັດການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ.

2.1 ດ້ານດີ ແລະ ຜົນສຳເລັດ.

ຕະຫຼອດໄລຍະກາງສະ

ອ່ານຕໍ່ໜ້າ 6

# ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງອັດຕະປື

ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອ 6 ຂອງສະພາແຫ່ງຊາດ ຊຸດທີ IX, ທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື ໄດ້ໃຫ້ສຳພາດວ່າ: ຜ່ານການຈັດຕັ້ງປະຕິບັດຕາມ 3 ພາລະບົດບາດຂອງສະມາຊິກສະພາແຫ່ງຊາດ ປະສານສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ໂດຍສະເພາະແມ່ນການລົງເຄື່ອນໄຫວຕິດຕາມກວດກາຕິດພັນກັບການຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນໄລຍະຜ່ານມາ, ສາມາດເຫັນບັນຫາດັ່ງນີ້:

**I. ໄດ້ປະສານທົບກັບກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ລົງຕິດຕາມກວດກາ** ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດ ຢູ່ແຂວງອັດຕະປື ໂດຍໄດ້ສຸມໃສ່ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງຕິດພັນກັບວຽກພັດທະນາຊົນນະບົດລຶບລ້າງຄວາມທຸກຍາກ ເປັນຕົ້ນ:

1) ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ, ທາງຫຼວງແຫ່ງຊາດ 18 A ໄລຍະ 1 (ຊ່ວງທາງແຕ່ບ້ານປີນດົງຫາຂົວຫ້ວຍອຸກ) ມີລວງຍາວທັງໝົດ 27 ກິໂລແມັດ, ປະກອບ 12 ສັນຍາ ລວມມູນຄ່າກໍ່ສ້າງທັງໝົດ 95,9 ຕື້ກວ່າກີບ (ແຫຼ່ງທຶນຊໍາລະນຳໃຊ້ງົບປະມານຈາກບໍລິສັດເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍ, ປະຕິບັດໄດ້91,73%);

2) ໂຄງການກໍ່ສ້າງເສັ້ນທາງປູຢາງ 02 ຊັ້ນ, ທາງຫຼວງແຫ່ງຊາດ 18 A ໄລຍະ 2 (ຊ່ວງທາງແຕ່ຂົວຫ້ວຍອຸກຫາເທສະບານແຂວງ) ມີລວງຍາວທັງໝົດ 23 ກິໂລແມັດ, ປະກອບ 10 ສັນຍາ ລວມມູນຄ່າກໍ່ສ້າງທັງໝົດ 33 ຕື້ກວ່າກີບ (ແຫຼ່ງທຶນຊໍາລະນຳໃຊ້ງົບປະມານຂອງລັດ ແລະ ແຫຼ່ງທຶນອື່ນໆ ຂອງແຂວງ ປະຕິບັດໄດ້ 45,40% ຕົ້ນປີ 2024 ກໍ່ສ້າງສຳເລັດ);

3) ໂຄງການກໍ່ສ້າງ 4 ເລນເທສະບານເມືອງຊານໄຊມູນຄ່າ 60,5 ຕື້ກວ່າກີບ ປະຕິບັດໄດ້ 3,41 ຕື້ກວ່າກີບເທົ່າກັບ 5.63%;

4) ໂຄງການກໍ່ສ້າງປູຢາງເທສະບານແຂວງ ມູນຄ່າ 17,8 ຕື້ກວ່າກີບ ປະຕິບັດໄດ້ 9,8 ຕື້ກວ່າກີບ ເທົ່າກັບ 55%;

5) ໂຄງການກໍ່ສ້າງທາງ 9037 ບ້ານສະແຄະ ມູນຄ່າ 30,5 ຕື້ກວ່າກີບ ປະຕິບັດໄດ້ 9,2ຕື້ກວ່າກີບເທົ່າກັບ30,12%.

6) ໂຄງການກໍ່ສ້າງປູຢາງ 2 ຊັ້ນ ບ້ານຄັນໝາກກ່ອງ ເທດສະບານເມືອງໄຊເສດຖາ ມູນຄ່າ 1,6 ຕື້ກວ່າກີບ ປະຕິບັດໄດ້ 556,5 ລ້ານກີບ ເທົ່າກັບ 29,27%;

- ໃນນັ້ນໂຄງການທີ່ມີມູນຄ່າ 20 ຕື້ກີບລົງມາ ມີ 6 ໂຄງການ; ໂຄງການຟື້ນຟູໄພພິບັດ ມີ 8 ໂຄງການ (ບ້ວງໄພພິບັດ); ໂຄງການສະເໜີໃໝ່ປີ 2023 ປະເພດ IV ມູນຄ່າ 20 ຕື້ກີບຂຶ້ນໄປ ມີ 2 ໂຄງການ ແລະ 2 ໂຄງການທີ່ປຶກສາໂຄງການປ້ອງກັນຕາຝັ່ງເຈື່ອນບ້ານເຊກະໝາຍເມືອງສາມັກຄີໄຊ ແຂວງອັດຕະປື ມູນຄ່າ 20 ຕື້ກີບຂຶ້ນໄປ ມີ 2 ໂຄງການ:

- ໂຄງການສະເໜີໃໝ່ປີ 2024; ວຽກງານກໍ່ສ້າງ ແລະ ສ້ອມແປງທາງ.

1) ວຽກກໍ່ສ້າງ; ມີທັງໝົດ 9 ໂຄງການ ແລະ 1 ທີ່ປຶກສາ ມູນຄ່າທັງໝົດ 322,2 ຕື້ກວ່າກີບ

2) ວຽກສ້ອມແປງພື້ນທີ່ 3 ໂຄງການ ມູນຄ່າທັງໝົດ 15,1 ຕື້ກວ່າກີບ;

● ຜ່ານການລົງຕິດຕາມກວດກາການຈັດຕັ້ງປະຕິບັດຕົວຈິງຂອງຄະນະປະຈຳສະພາປະຊາຊົນແຂວງ ເຫັນວ່າມີຫຼາຍບໍລິສັດຮັບເໝົາກໍ່ສ້າງເສັ້ນທາງ ໄດ້ມີການຢຸດການດຳເນີນໂຄງການກໍ່ສ້າງຊົ່ວຄາວ ເນື່ອງຈາກວ່າຫຼາຍສາຍເຫດ ເປັນຕົ້ນ: ລາຄາສິນຄ້າໃນທ້ອງຕະຫຼາດປັດຈຸບັນມີການເໜັງຕີງ, ຄ່າແຮງງານ, ວັດສະດຸກໍ່ສ້າງ ແລະ ນ້ຳມັນເຊື້ອໄຟ ເຮັດໃຫ້ການບຸກເບີກ ແລະ ກໍ່ສ້າງເສັ້ນທາງມີບັນຫາ ແລະ ສິ່ງຜົນສະທ້ອນຕໍ່ຄວາມຄືບໜ້າຂອງແຜນການແຕ່ລະໜ້າວຽກທີ່ວາງໄວ້.

**II. ປັດຈຸບັນ ແຂວງອັດຕະປື** ຍັງໄດ້ສຸມໃສ່ແກ້ໄຂບັນຫາການຊົດເຊີຍໃຫ້ແກ່ພໍ່ແມ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກເຂື່ອນເຊປຽນ-ເຊນ້ຳນ້ອຍແຕກ, ໄລຍະຜ່ານມາໄດ້ປະຕິບັດສຳເລັດ 5 ລາຍການຄື: 1). ປະເພດພາຫະນະ; 2). ເຄື່ອງຮັບໃຊ້ໃນເຮືອນຄົວ; 3). ວິສາຫະກິດຄົວເຮືອນ; 4). ປະເພດສັດລ້ຽງ; 5). ປະເພດສະບຽງອາຫານ ແລະ ເຄື່ອງຮັບໃຊ້ກະສິກຳ; ສ່ວນວຽກງານການຊົດເຊີຍລາຍການທີ 6 (ໂຄງສ້າງ ແລະ ສິ່ງປຸກສ້າງມີ: ເຮືອນ, ຮ້ານ, ໄມ້ເຄື່ອງເຮືອນ, ຄອກສັດ ແລະ ອື່ນໆ; ຜົນຜະລິດມີ: ເຂົ້າໃນນາ, ພືດລົ້ມລຸກ, ໄມ້ໃຫ້ໝາກ, ໄມ້ອຸດສາຫະກຳ, ໜອງ, ຫຼຸມປາ ແລະ ອື່ນໆ; ວັດຖຸມີຄ່າມີ: ເງິນສົດ, ເງິນຫຼຽນ, ຄຳ, ຄ້ອງລາ ແລະ ອື່ນໆ) ໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບແມ່ນຍັງບໍ່ສາມາດປະຕິບັດໄດ້ ຍ້ອນການເກັບກຳຂໍ້ມູນ ມີການປ່ຽນແປງ, ຕົກຫຼົ່ນຫຼົງລືມໃນ 5 ລາຍການຜ່ານມາ ແລະ ມີຕົວເລກເພີ່ມສູງຂຶ້ນເລື້ອຍໆ, ເຖິງວ່າຈະມີການຈັດກອງປະຊຸມຮ່ວມລະຫວ່າງຄະນະກຳມະການໄພພິບັດຂັ້ນແຂວງ, ຄະນະກຳມະການໄພພິບັດຂັ້ນເມືອງ ແລະ ບໍລິສັດ PNPC ຢູ່ຫຼາຍຄັ້ງ ແຕ່ກໍຍັງບໍ່ທັນມີຄວາມເປັນເອກະພາບກັນໄດ້.



● ທິດທາງຈຸດສຸມ ແກ້ໄຂບັນຫາໃນຕໍ່ໜ້າ

1) ຄະນະກຳມະການໄພພິບັດແຕ່ລະຂັ້ນຕ້ອງໄດ້ເອົາໃຈໃສ່ໃນການປະສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ພ້ອມທັງປຶກສາຫາລືນຳພາກລັດ ເພື່ອຄວາມເປັນເອກະພາບ ໃນການເກັບກຳຂໍ້ມູນ ແລະ ຕັດສິນບາງບັນຫາໃນລາຍການທີ6 ໄປພ້ອມໆກັບການສືບຄົ້ນຄວ້າປຶກສາຫາລືໃນຄະນະກຳມະການໄພພິບັດຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອຄວາມເປັນເອກະພາບກັນໃນການຕັດສິນບາງບັນຫາໃນລາຍການທີ 6; ເປີດກອງປະຊຸມໃນການເກັບກຳ, ວິເຄາະຂໍ້ມູນ ລະຫວ່າງແຂວງ, ເມືອງ ແລະ ບໍລິສັດ PNPC ຊີ້ແຈງບັນຫາຕ່າງໆເພື່ອຄວາມເປັນເອກະພາບກັນໃນການຊົດເຊີຍ.

**III. ການຈັດຕັ້ງປະຕິບັດໃນການຕິດຕາມກວດກາ2 ວາລະແຫ່ງຊາດ:**

ຕະຫຼອດໄລຍະ2021-2023 ມາຮອດປັດຈຸບັນສະພາປະຊາຊົນແຂວງ ກໍໄດ້ເອົາໃຈໃສ່ຕິດຕາມກວດກາ ກ່ຽວກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະການແກ້ໄຂບັນຫາຢາເສບຕິດ, ຜ່ານການຕິດຕາມກວດກາສາມາດຕີລາຄາໄດ້ດັ່ງນີ້:

1) ການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ: ແຂວງອັດຕະໄດ້ເອົາໃຈໃສ່ສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກເພື່ອສ້າງຖານລາຍຮັບທີ່ເຂັ້ມແຂງ ແລະ ຍືນຍົງ ເປັນຕົ້ນ: ປູກເຂົ້າ (156.370 ໂຕນ); ປູກພືດສະບຽງອາຫານ(17.378ໂຕນ); ປູກພືດເປັນສິນຄ້າ(1.945.862 ໂຕນ ໃນນັ້ນມີກ້ວຍ, ອ້ອຍ ແລະ ມັນຕົ້ນ); ລ້ຽງສັດເປັນສິນຄ້າ (549.862 ໂຕ); ຜະລິດກະແສໄຟຟ້າ (10.382,69 ກິໂລວັດ); ຜະລິດອຸດສະຫະກຳປຸງແຕ່ງ ແລະ ຫັດຖະກຳ (1.165,73 ຕື້); ຂະແໜງບໍລິການນຳເຂົ້າ-ສົ່ງອອກ (352,42 ລ້ານໂດລາ ); ການສ້າງຄວາມເຂັ້ມແຂງດ້ານການຈັດເກັບລາຍຮັບປະຕິບັດໄດ້ທັງໝົດ 1.031,2 ຕື້ກວ່າກີບ;

2) ການປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ: ຄະນະພັກ-ຄະນະນຳ ແຕ່ລະຂັ້ນໄດ້ເອົາໃຈໃສ່ຊີ້ນຳຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢ່າງເຂັ້ມງວດ ເຊິ່ງໄດ້ຖືເອົາການໂຄສະນາ, ປຸກລະດົມ, ສຶກສາອົບຮົມເປັນຕົ້ນຕໍ, ໄດ້ຖືເອົາການຕ້ານ, ສະກັດກັ້ນ ແລະ ປ້ອງກັນໄປພ້ອມກັບການປາບປາມບັນຫາຢາເສບຕິດ ໄປພ້ອມກັບການນຳໃຊ້ມາດຕະການທາງດ້ານກົດໝາຍ ລົງໂທດຕໍ່ຜູ້ກະທຳຜິດກ່ຽວກັບບັນຫາຢາເສບຕິດ; ໄລຍະຜ່ານມາ ອີງການສືບສວນ-ສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບຜູ້ຖືກເຄາະຮ້າຍຈາກຢາເສບຕິດເຂົ້າປິ່ນປົວຢູ່ສູນບຳບັດທັງໝົດ 47 ຄົນ, ຍິງ 0 ຄົນ ແລະ ປິ່ນປົວແລ້ວ ກັບຄືນສູ່ຄອບຄົວ ຈຳນວນ 37 ຄົນ, ຍິງ 0 ຄົນ, ສືບຕໍ່ປິ່ນປົວ 10 ຄົນ, ຍິງ 0 ຄົນ; ນອກຈາກນີ້ຍັງໄດ້ຄົ້ນຄວ້າປັບປຸງພື້ນຖານໂຄງລ່າງ, ສະຖານທີ່ຄຸມຂັງ-ດັດສ້າງ, ສູນບຳບັດ-ປິ່ນປົວ-ຝຶກວິຊາຊີບ ໃຫ້ຜູ້ຕິດຢາເສບຕິດ, ປະກອບວັດຖຸອຸປະກອນ, ພາຫະນະຮັບໃຊ້ທີ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ; ຜ່ານມາມີຄະດີຢາເສບຕິດເກີດຂຶ້ນ 136 ເລື່ອງ, ຈັບຜູ້ຖືກຫາໄດ້ 210 ຄົນ ຍິງ 37 ຄົນ, ຄົນຕ່າງປະເທດ 5 ຄົນ ຍິງ 0 ຄົນ (ຫວຽດນາມ), ສະຫຼຸບສົ່ງໃຫ້ອົງການໄອຍະການ 56 ລາຍ, ຊັດມ້ຽນ 3 ລາຍ, ໂຈະການດຳເນີນຄະດີ 5 ລາຍ, ຍັງສືບຕໍ່ດຳເນີນຄະດີ 72 ລາຍ ແລະ ຂຶ້ນບັນຊີເປົ້າໝາຍຂົນສົ່ງ-ຄ້າຂາຍລາຍຍ່ອຍ ແລະ ລາຍກາງໃນທົ່ວແຂວງໄດ້ຫຼາຍເປົ້າໝາຍ.

● ຜ່ານການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂໍມີບາງຄຳເຫັນດັ່ງນີ້:

- ໃນການປະຕິບັດວາລະແຫ່ງຊາດ ໃນຂະແໜງການຂັ້ນແຂວງ ແລະ ຂັ້ນເມືອງ ຍັງບໍ່ມີຄວາມເປັນເອກະພາບ ແລະ ເຂົ້າໃຈຢ່າງເລິກເຊິ່ງ, ເດັດຂາດການແກ້ໄຂບັນຫາທີ່ພົວພັນກັບຂະແໜງການຕົນຍັງຊັກຊ້າ, ມີການເອື່ອຍອີງ ແລະ ຖິ້ມຄວາມຮັບຜິດຊອບໃຫ້ກັນ; ຍັງບໍ່ທັນໄປຕາມຫຼັກການທີ່ເປັນມືອາຊີບ ແລະ ຕາມຄວາມຈຳເປັນ, ບາງຂະແໜງການຍັງຖືເອົາວຽກນີ້ປະຕິບັດຄືວຽກປົກກະຕິ ເປັນຕົ້ນການຄົ້ນຄວ້າວາງແຜນຍັງບໍ່ທັນລະອຽດ, ການຕິດຕາມກວດກາ ແລະ ການປະເມີນຜົນຄວາມຄືບໜ້າຂອງວາລະແຫ່ງຊາດ ຍັງບໍ່ທັນໄດ້ດີ; ການຍົກສູງປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານຂອງລັດ ເປັນຕົ້ນ: ດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ, ການຄຸ້ມຄອງຫົວໜ່ວຍການຊື້-ຂາຍແລກປ່ຽນເງິນຕາຍັງບໍ່ມີປະສິດທິພາບດີເທົ່າທີ່ຄວນ, ການຕິດຕາມກວດກາຍັງບໍ່ທັນເຂັ້ມງວດ.

- ການຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ເຫັນວ່າການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຍັງບໍ່ທັນເລິກເຊິ່ງ, ຍັງມີການລະເມີດກົດໝາຍໃນສັງຄົມໃນຫຼາຍກໍລະນີ; ການຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍທີ່ມີຢູ່ແລ້ວ ຍັງບໍ່ທັນໄດ້ດີ.

- ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ຍັງຊັກຊ້າ, ການໂຄສະນາສ້າງຄວາມຮັບຮູ້ໃນທົ່ວສັງຄົມ ຍັງບໍ່ທັນເລິກເຊິ່ງ ໃນທຸກເປົ້າໝາຍໂດຍສະເພາະແມ່ນເຂດທຸລະກັນດານ, ຫ່າງໄກສອກຫຼີກ, ຜູ້ໃຊ້ແຮງງານ, ສະຖາບັນການສຶກສາ ແລະ ອື່ນໆ ຄວາມເປັນເຈົ້າການຂອງຄະນະນຳບາງຂະແໜງການບາງທ້ອງຖິ່ນຍັງບໍ່ສູງ, ຍັງຖືເປັນວຽກປົກກະຕິທຳມະດາ, ວິທີເຮັດວຽກຂອງພາກສ່ວນເຈົ້າໜ້າທີ່ສ່ວນຫຼາຍ ຍັງສຸມໃສ່ແຕ່ຂັ້ນແຂວງເປັນສ່ວນຫຼາຍ, ສ່ວນຂັ້ນເມືອງ, ຂັ້ນຮາກຖານບ້ານຍັງບໍ່ທັນຮັບການເອົາໃຈໃສ່ເທົ່າທີ່ຄວນ, ສະຖານທີ່ຄຸມຂັງຊົ່ວຄາວຂັ້ນແຂວງ-ເມືອງຍັງຄັບແຄບ, ການກັກຂັງຍັງປົນເປກັນ ລະຫວ່າງຜູ້ຕ້ອງຫາຢາເສບຕິດກັບຜູ້ຕ້ອງຫາຄະດີອື່ນໆ; ການດຳເນີນຄະດີຍັງຊັກຊ້າ, ຍັງມີຫຼາຍຄະດີຄ້າງຢູ່ໃນໄລຍະການສືບສວນ-ສອບສວນຂອງເຈົ້າໜ້າທີ່ເຮັດໃຫ້ການກັກຂັງພາງເກີນກຳນົດ ຕາມກົດໝາຍກຳນົດໄວ້ການເກັບກຳຂໍ້ມູນແຫຼ່ງຂ່າວກ່ຽວກັບການເຄື່ອນໄຫວເປົ້າໝາຍຢາເສບຕິດຍັງບໍ່ທັນລະອຽດຈະແຈ້ງ ແລະ ຮັດກຸມແທ້.

● ວິທີການແກ້ໄຂກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ:

- ສຸມໃສ່ການປະຕິບັດບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເຂົ້າໃນການແກ້ໄຂບັນຫາວຽກຈຸດສຸມ ແລະ ມາດຕະການທີ່ກຳນົດໃນມະຕິວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນໃຫ້ບັນລຸຕາມແຜນ; ຂະແໜງການຈະຕ້ອງເອົາ 5 ວຽກຈຸດສຸມຂອງວາລະແຫ່ງຊາດ ເປັນວຽກບຸລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX (2021-2025);

● ວິທີການແກ້ໄຂກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ:

- ສືບຕໍ່ເພີ່ມທະວີການຈັດຕັ້ງປະຕິບັດການແກ້ໄຂບັນຫາຢາເສບຕິດໃຫ້ແຂງແຮງຂຶ້ນກວ່າເກົ່າ ໂດຍເຮັດໃຫ້ວຽກງານດັ່ງກ່າວ ກາຍເປັນໜ້າທີ່ພັນທະ ແລະ ຄວາມຮັບຜິດຊອບຂອງທຸກພາກສ່ວນໃນສັງຄົມ, ເອົາໃຈໃສ່ໂຄສະນາເຜີຍແຜ່ລະບຽບ

ອ່ານຕໍ່ໜ້າ 6

# ຕີລາຄາຜົນໄດ້ຮັບ ແລະ ຂໍ້ຫຍຸ້ງຍາກການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຢູ່ໄຊສົມບູນ

ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນແຂວງໄຊສົມບູນໄດ້ໃຫ້ສຳພາດຕໍ່ສື່ມວນຊົນສະພາແຫ່ງຊາດວ່າ: ຕະຫຼອດໄລຍະຜ່ານມາ ເຖິງວ່າສະພາບພາກພື້ນ ແລະ ສາກົນມີການຜັນແປຢ່າງໄວວາ ແລະ ສະຫຼັບສັບຊ້ອນ,ສະພາບພາຍໃນປະເທດເຮົາກໍພົບຄວາມຫຍຸ້ງຍາກ ເປັນຕົ້ນ:ເສດຖະກິດ-ການເງິນ,ບັນຫາເງິນເຟີ້ມີທ່າອ່ຽງເພີ່ມຂຶ້ນ ແລະ ອື່ນໆ ເປັນສາເຫດເຮັດໃຫ້ຄ່າຄອງຊີບນັບມື້ປັບຕົວສູງຂຶ້ນເຊິ່ງສົ່ງຜົນກະທົບທາງກົງແລະທາງອ້ອມ ຕໍ່ການສ້າງສາພັດທະນາປະເທດຊາດ ກໍຄືແຂວງໄຊສົມບູນຂອງພວກເຮົາ. ແຕ່ຍ້ອນມີອົງຄະນະພັກແຂວງ-ອົງການປົກຄອງແຂວງໄຊສົມບູນ ໄດ້ເອົາໃຈໃສ່ໃກ້ຊິດຕິດແທດ ນຳພາ-ນຳຊີ້ແທດເຖິງຕົວຈິງ ບວກໃສ່ຄວາມເປັນເຈົ້າການຂອງພະນັກງານນຳພາ-ຄຸ້ມຄອງ ແລະ ພະນັກງານວິຊາການຂອງແຂວງ,ເມືອງ ແລະ ພາກສ່ວນກ່ຽວຂ້ອງ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ຈຶ່ງເຮັດໃຫ້ແຂວງໄຊສົມບູນ ສາມາດຜ່ານຜ່າອຸປະສັກ, ຂໍ້ຫຍຸ້ງຍາກ ແລະ ສາມາດຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນຫຼາຍດ້ານ ເປັນຕົ້ນ: ແຂວງໄຊສົມບູນມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເສດຖະກິດຍັງສືບຕໍ່ຂະຫຍາຍຕົວລວມຍອດຜະລິດຕະພັນພາຍໃນຂອງ (GDP) ຂະຫຍາຍຕົວສະເລ່ຍ 7,5%, ສາມາດເກັບລາຍຮັບໄດ້ເກີນແຜນ ຫຼາຍປີຕິດຕໍ່ກັນ ແລະ ຄາດກະວ່າການເກັບລາຍຮັບເຂົ້າງົບປະມານປະຈຳປີ2023 ຈະໄດ້ເກີນແຜນການທີ່ວາງໄວ້ ເພາະວ່າຜ່ານ 6 ເດືອນຕົ້ນປີຜ່ານມາສາມາດເກັບລາຍຮັບເຂົ້າງົບປະມານໄດ້ 518,16 ຕື້ກີບ, ເທົ່າກັບ 177,26% ຂອງແຜນ 6 ເດືອນຕົ້ນປີ 2023 ແລະ ເທົ່າກັບ 109,45% ຂອງແຜນການປີ 2023 ເຫັນໄດ້ວ່າ 6 ເດືອນຕົ້ນປີ ສາມາດຈັດເກັບລາຍຮັບໄດ້ ເກີນແຜນແລ້ວ, ນອກຈາກນີ້ສະພາພວກເຮົາກໍໄດ້ສົມທົບກັບອົງການປົກຄອງ ຄົ້ນຄວ້າຈັດສັນງົບປະມານເງິນເກີນແຜນແຕ່ລະປີເພື່ອຊຳລະໜີ້ສິນໂຄງການເກົ່າ ແລະ ໂຄງການສະເໜີໃໝ່ທີ່ມີຄວາມຈຳເປັນຂອງແຂວງຈຳນວນໜຶ່ງ, ການລົງທຶນຂອງພາກເອກະຊົນເຫັນວ່ານັກລົງທຶນເລີ່ມໃຫ້ຄວາມສົນໃຈເຂົ້າໃນການລົງທຶນຢູ່ແຂວງພວກເຮົາຫຼາຍຂຶ້ນ ໂດຍສະເພາະແມ່ນການລົງທຶນເຂົ້າໃນກິດຈະການຂຸດຄົ້ນແຮ່ທາດ ແລະ ກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ແລະ ການສຶກສາຄວາມເປັນໄປໄດ້ດ້ານພະລັງງານໄຟຟ້ານ້ຳຕົກ ແລະ ລົງທຶນເຂົ້າໃນກິດຈະການອື່ນໆ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວໂດຍຫຍໍ້ມາຂ້າງເທິງນັ້ນ ແຂວງໄຊສົມບູນພວກເຮົາ ກໍຍັງມີບັນຫາພົ້ນເດັ່ນ ແລະ ເຄັ່ງຮ້ອນທີ່ທຸກພາກສ່ວນຕ້ອງຮ່ວມໄມ້ຮ່ວມມື ສືບຕໍ່ແກ້ໄຂ ດັ່ງນີ້:

**I. ບາງບັນຫາພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງໄຊສົມບູນ ໂດຍລວມ ມີ ດັ່ງນີ້:**

1. ບັນຫາການບຸກລຸກຈັບຈອງທີ່ດິນປ່າໄມ້ຊະຊາຍ ແລະ ໄຟໄໝ້ລາມປ່າ ເຊິ່ງບັນຫານີ້ ແມ່ນບັນຫາໜ້າເປັນຫ່ວງ ເນື່ອງຈາກວ່າ ບັນຫານີ້ເປັນບັນຫາສືບເນື່ອງມາໄດ້ຫຼາຍປີແລ້ວ ຖ້າບໍ່ມີການແກ້ໄຂ ອາດຈະເປັນຕົ້ນເຫດເຮັດໃຫ້ການບຸກລຸກຈັບຈອງທີ່ດິນປ່າໄມ້ຊະຊາຍແຜ່ລາມໄປຕື່ມອີກ;

2. ບັນຫາການຂາດຄູ ແລະ ການແກ້ໄຂບັນຫາຄູ ແລະ ແພດໝໍທີ່ອາສາສະໝັກ ທີ່ອາສາມາໄດ້ຫຼາຍປີແລ້ວ ບໍ່ສາມາດມີໂອກາດມາຮອງຮັບເປັນລັດຖະກອນ;

3. ບັນຫາໂຄງການລົງທຶນຂອງລັດຈຳນວນໜຶ່ງບໍ່ມີຄວາມຄືບໜ້າ ຍ້ອນຜູ້ຮັບເໝົາມີຄວາມຫຍຸ້ງຍາກທາງດ້ານການເງິນ ບວກໃສ່ອັດຕາເງິນເຟີ້ສູງ, ລາຄາສິນຄ້າ ແລະ ວັດຖຸກໍ່ສ້າງແພງຂຶ້ນຫຼາຍ ເປັນຕົ້ນແມ່ນ ພື້ນຖານໂຄງລ່າງດ້ານເສັ້ນທາງຄົມມະນາຄົມ ບໍ່ສາມາດຕອບສະໜອງຕາມຄວາມຕ້ອງການໃນການຂົນສົ່ງສິນຄ້າ ແລະ ການທຳການຜະລິດ, ການບໍລິການ ເປັນສາເຫດການຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກພົບຄວາມຫຍຸ້ງຍາກ;

4. ບັນຫາການຜະລິດກະສິກຳເປັນສິນຄ້າຂອງປະຊາຊົນເລີ່ມມີການຂະຫຍາຍຕົວໃນບາງພືດ, ແຕ່ການຊຸກຍູ້ສົ່ງເສີມຂອງພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນແທດເຖິງ ແລະ ມີຈຸດສຸມ, ເຮັດໃຫ້ຄວາມສາມາດແຂ່ງຂັນກັບແຂວງອື່ນ ແລະ ທົດແທນການນຳເຂົ້າມາຈາກແຂວງອື່ນມີຄວາມສ່ຽງທີ່ຈະບໍ່ບັນລຸຕາມຄາດໝາຍ;

5. ການຈັດສັນພູມລຳເນົາ-ອາຊີບຄົງທີ່ການຈັດສັນດິນ



ຜະລິດກະສິກຳຕິດພັນກັບການວາງແຜນຄຸ້ມຄອງນຳໃຊ້ທີ່ດິນ, ການອອກໃບຕາດິນ, ກຳນົດ 3 ປະເພດປ່າ ຍັງດຳເນີນການຊັກຊ້າຫຼາຍ;

6. ການຄຸ້ມຄອງທີ່ດິນ-ປ່າໄມ້, ສິ່ງແວດລ້ອມ-ສັງຄົມ ໃນຂອບເຂດໂຄງການຂຸດຄົ້ນແຮ່ທາດ, ເຊົ່າສຳປະທານຍັງມີຫຼາຍໂຄງການຍັງເຮັດບໍ່ທັນໄດ້ດີ, ການຕິດຕາມລາຍງານສະພາບຜົນກະທົບຕໍ່ສິ່ງແວດລ້ອມຍັງບໍ່ທັນເຂັ້ມງວດ;

**II. ຕີລາຄາຕໍ່ 2 ວາລະແຫ່ງຊາດມີຜົນໄດ້ຮັບ ຫຼື ຂໍ້ຫຍຸ້ງຍາກດັ່ງນີ້:**

1. ຕີລາຄາ ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ.

ພາຍຫຼັງສະພາແຫ່ງຊາດໄດ້ມີມະຕິຮັບ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ສະພາປະຊາຊົນແລະອົງການປົກຄອງແຂວງ ກໍເຫັນສຳຄັນ ແລະ ໄດ້ສົມທົບກັນຄົ້ນຄວ້າງົບປະມານເງິນເກີນແຜນຂອງແຂວງຈຳນວນໜຶ່ງ ມອບໃຫ້ອົງການປົກຄອງແຂວງເພື່ອຈັດຕັ້ງປະຕິບັດຕໍ່ວຽກງານວະລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນຂອງແຂວງໄຊສົມບູນ ໂດຍສຸມໃສ່ບາງຈຸດຕົ້ນຕໍ ດັ່ງນີ້.

1) ວຽກງານສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າແລະເປັນສິນຄ້າສົ່ງອອກເພື່ອສ້າງລາຍຮັບທີ່ເຂັ້ມແຂງ ແລະ ຍືນຍົງ.

ໄດ້ສຸມໃສ່ການສຳຫຼວດຄວາມຕ້ອງການຕະຫຼາດພາຍໃນແຂວງ ເພື່ອເປັນຂໍ້ມູນໃຫ້ຂະແໜງການກ່ຽວຂ້ອງໃນການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ, ເອົາໃຈໃສ່ຊຸກຍູ້ ແລະ ສົ່ງເສີມ ປະຊາຊົນບັນດາເຜົ່າ ໃນການປູກ, ການລ້ຽງເພື່ອທົດແທນການນຳເຂົ້າໂດຍສະເພາະແມ່ນການປູກ-ການລ້ຽງທີ່ມີພື້ນຖານ ແລະ ເປັນທ່າແຮງພົ້ນເດັ່ນຂອງແຕ່ລະເມືອງ ສາມາດ ກຸ້ມຕົນເອງ ແລະ ສາມາດສົ່ງອອກໄດ້ເຊັ່ນ: ເຂົ້າ, ມັນຕົ້ນ, ສັດໃຫຍ່, ໝາກນັດ, ໝາກກ້ຽງ, ສາລີ, ມັນຕົ້ນ ແລະອື່ນໆ.

2)ວຽກງານສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ.

ສຸມໃສ່ ທັນເປັນທັນສະໄໝ ໃນການຈັດເກັບລາຍຮັບ ແລະ ອັດຊ່ອງວ່າງຮົ່ວໄຫຼຂອງງົບປະມານ ແມ່ນປະຕິບັດການແຈ້ງມອບຜ່ານລະບົບ TaxRis ເປັນມາດຕະຖານດຽວກັບແຂວງອື່ນທົ່ວປະເທດ, ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການຕິດຕາມ, ກວດກາ ແລະ ຄຸ້ມຄອງ ກິດຈະການທີ່ສ້າງລາຍຮັບທີ່ນອນຢູ່ໃນການຄຸ້ມຄອງຂອງຂະແໜງການຕົນ ເປັນຕົ້ນ: ສຳເລັດການເກັບກຳຂໍ້ມູນເບື້ອງຕົ້ນໃນການສ້າງບັນຊີຮຽກການລົງທຶນທົ່ວແຂວງ,ການຄຸ້ມຄອງການຂຸດຄົ້ນແຮ່ເຫຼັກແບບທົດລອງ ສົ່ງອອກໄດ້ 18,07 ລ້ານໂດລາສະຫະລັດ; ການຂຶ້ນທະບຽນ ແລະ ຄຸ້ມຄອງແຮງງານ ເກັບລາຍຮັບໄດ້ 342,74 ລ້ານກີບ (ເພີ່ມ 20%), ກວດກາບັນດາຫົວໜ່ວຍວິສາຫະກິດ ທີ່ເຄື່ອນໄຫວບໍ່ສອດຄ່ອງຕາມລະບຽບການໄດ້ 173 ຫົວໜ່ວຍ; ອອກເອກະສານແຈ້ງການກ່ຽວກັບການຄຸ້ມຄອງລົດດັດແປງ, ສຸມໃສ່ການອອກໃບຕາດິນ (3 ເມືອງທີ່ບໍ່ມີໂຄງການອອກໃບຕາດິນ) ໄດ້ 2.423 ຕອນ ແລະ ຈັດສັນການນຳໃຊ້ 8 ປະເພດທີ່ດິນຂັ້ນບ້ານ ຢູ່ 2 ເມືອງຄື: ເມືອງລ້ອງຊານ ແລະ ເມືອງທ່າໂທມ.

3) ວຽກງານສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ຍົກສູງປະສິດທິພາບການລົງທຶນ-ລາຍຈ່າຍງົບປະມານ ແລະການແກ້ໄຂໜີ້ສິນ.

ໄດ້ສຸມໃສ່ເຊື່ອມຊຶມດຳລັດ ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ນຍ, ຂໍ້ຕົກລົງວ່າດ້ວຍການກຳນົດໝາຍໃຊ້ຈ່າຍງົບປະມານຂອງລັດ,ການປະຢັດແລະຕ້ານການຟຸມເຟືອຍ ສະບັບເລກທີ 0200/ກງ ແລະ ຜັນຂະຫຍາຍດຳລັດ ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ນຍ ມາເປັນແຈ້ງການຂອງແຂວງ ເພື່ອເຮັດໃຫ້ການນຳໃຊ້ງົບປະມານຂອງລັດ ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບລະບຽບຫຼັກການທີ່ວາງໄວ້,ນຳໃຊ້ລະບົບທັນສະໄໝ GFIS ເຂົ້າໃນການຄຸ້ມຄອງການອະນຸມັດ ແຜນງົບປະມານແຫ່ງລັດ ເພື່ອໃຫ້ມີຄວາມລະອຽດ, ຈະແຈ້ງຂຶ້ນຕື່ມ ແນໃສ່ການສ້າງແຜນງົບປະມານ ແລະ ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານຂອງລັດ ເພື່ອໃຫ້ຖືກຕ້ອງ, ສອດຄ່ອງ, ທັນສະໄໝ,ສະດວກ,ວ່ອງໄວ,ໂປ່ງໃສ ແລະ ສາມາດກວດສອບໄດ້.

4) ວຽກງານຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ.

ແຕ່ລະຂະແໜງການໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍກົດໝາຍ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳຕ່າງໆ ເພື່ອເຮັດໃຫ້ນິຕິກຳດັ່ງກ່າວມີຄວາມກະທັດຮັດ, ຖືກຕ້ອງ, ສອດຄ່ອງ ກັບສະພາບການຈັດຕັ້ງປະຕິບັດວຽກງານຕົວຈິງ. ໄດ້ຈັດຕັ້ງເຜີຍແຜ່, ເຊື່ອມຊຶມກົດໝາຍວ່າດ້ວຍຕ້ານການສໍ້ລາດບັງຫຼວງ ແລະ ນິຕິກຳຕ່າງໆທີ່ພົວພັນ ເຊັ່ນ: ບົດແນະນຳ ສະບັບເລກທີ 46/ອກລ ແລະ ດຳລັດຂອງລັດຖະບານ ສະບັບເລກທີ159/ລບ ໃຫ້ບັນດາພະແນກການກົມກອງ, ອົງການອ້ອມຂ້າງແຂວງ ແລະ ເມືອງ ຮັບຮູ້ ແລະ ນຳໄປຈັດຕັ້ງປະຕິບັດ.

**2. ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ:**

ພາຍຫຼັງສະພາແຫ່ງຊາດໄດ້ມີມະຕິຮັບ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ສະພາປະຊາຊົນ ແລະ ອົງການປົກຄອງແຂວງກໍເຫັນສຳຄັນ ແລະ ໄດ້ຄົ້ນຄວ້າງົບປະມານເງິນເກີນແຜນຂອງແຂວງຈຳນວນໜຶ່ງ ແລ້ວມອບໃຫ້ອົງການປົກຄອງແຂວງນຳໄປຈັດຕັ້ງປະຕິບັດຕໍ່ວຽກງານວະລະການແກ້ໄຂບັນຫາຢາເສບຕິດຂອງແຂວງໄຊສົມບູນ ໂດຍສຸມໃສ່ບາງຈຸດຕົ້ນໂຕ ດັ່ງນີ້.

1) ສ້າງແຜນຈັດຕັ້ງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂັ້ນແຂວງ ຂັ້ນເມືອງ ແລະ ບ້ານ (2021-2023), ແຕ່ງຕັ້ງຄະນະຮັບຜິດຊອບ, ກອງເລຂາຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນແຕ່ລະຂັ້ນ;

2) ລົງສຳຫຼວດເກັບຂໍ້ມູນ, ຂຶ້ນບັນຊີເປົ້າໝາຍເສບ, ຂາຍຢາເສບຕິດ ແລະ ຈຸດມືວສຸມຕ່າງໆໃນຮາກຖານ ພ້ອມທັງຊີ້ນຳການແກ້ໄຂຊ່ວຍຫຼາຍວິທີການ, ເຊັ່ນ: ສຶກສາອົບຮົມ, ບົດບັນທຶກ ແລະ ປະຕິບັດມາດຕະການທາງກົດໝາຍ; ການຈັດຕັ້ງຮາກຖານ, ຫົວໜ່ວຍຄອບຄົວ, ປະຊາຊົນ ແລະ ພາກສ່ວນທີ່ກ່ຽວໃນສັງຄົມ ໄດ້ໃຫ້ຄວາມຮ່ວມໄມ້ຮ່ວມມື, ຈິງໃຈລາຍງານ ສະໜອງຂໍ້ມູນກຸ່ມເປົ້າໝາຍ ທີ່ພົວພັນຢາເສບຕິດໃຫ້ເຈົ້າໜ້າທີ່ ແລະ ເປັນເຈົ້າການແກ້ໄຂບັນຫາຢາເສບຕິດຢ່າງຈິງຈັງ;

3) ໄດ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດຢູ່ຂັ້ນແຂວງເພື່ອຕິດຕາມ, ກວດການຈັດຕັ້ງປະຕິບັດວາລະແຫ່ງຊາດໃນແຕ່ລະຂັ້ນ.

ສ່ວນສະພາປະຊາຊົນແຂວງໄຊສົມບູນກໍມີສ່ວນຮ່ວມຊຸກຍູ້ອົງການປົກຄອງແຂວງ ໂດຍໄດ້ຈັດຕັ້ງປະຕິບັດດ້ວຍຫຼາຍຮູບການໃນທົ່ວສັງຄົມ ເຊັ່ນ: ໄດ້ອອກມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ຈຳນວນ 1 ສະບັບ ເພື່ອຮັບຮອງທາງດ້ານງົບປະມານ ແລະ ຮັບຮອງແຜນການຂອງອົງການປົກຄອງແຂວງກ່ຽວກັບການແກ້ໄຂບັນຫາຢາເສບຕິດ; ໄດ້ຊຸກຍູ້ຕິດຕາມກວດກາໂດຍຜ່ານການເຂົ້າຮ່ວມກອງປະຊຸມສະຫຼຸບຕີລາຄາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດທົ່ວແຂວງໄຊສົມບູນ; ລົງເຄື່ອນໄຫວຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາ, ເສດຖະກິດ-ສັງຄົມຂອງແຂວງແລະຕິດພັນກັບສອງວາລະແຫ່ງຊາດໃນ 5 ເມືອງທົ່ວແຂວງ; ຕິດຕາມກວດກາວຽກງານສອງວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ຄ້າຍຄຸມຂັງ-ດັດສ້າງ ກໍມີ້, ຜາແດງ; ສຶກສາອົບຮົມ, ໂຄສະນາເຜີຍແຜ່ກົດຫມາຍລະບຽບການ ແລະ ຜົນຮ້າຍຂອງຢາເສບຕິດໄດ້ລົງເຜີຍແຜ່ບັນດາເອກະສານກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ຂັ້ນ

ອ່ານຕໍ່ໜ້າ 7

## ຄວາມສາມາດ...

(ຕໍ່ຈາກໜ້າ 3)

ໄໝຜ່ານມາ ອົງການປົກຄອງແຂວງ, ສະພາປະຊາຊົນແຂວງ, ພະແນກການອ້ອມຂ້າງແຂວງ, ອົງການປົກຄອງເມືອງ, ໄດ້ເອົາໃຈໃສ່ເປັນບູລິມະສິດພິເສດ, ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງ, ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 5 ປີ (2021-2025) ແລະ ແຜນງົບປະມານແຫ່ງລັດ (2021-2023) ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ເຊິ່ງສະແດງໃຫ້ເຫັນຢ່າງຈະແຈ້ງໃນແຕ່ລະປີ ແຂວງເຊກອງຂາດດຸນງົບປະມານ 80-90% ຂອງແຜນການປີ. ມາຮອດປີ 2020ແຂວງສາມາດຈັດຕັ້ງປະຕິບັດລາຍຮັບງົບປະມານເກີນແຜນ, ປີ 2021 ປະຕິບັດໄດ້ 104,53 ຕື້ກີບ ເທົ່າ 129% ຂອງແຜນດັດແກ້(ປະຕິບັດໄດ້ເກີນແຜນ), ໃນປີ 2022 ປະຕິບັດໄດ້ 157,43 ຕື້ກີບ ທຽບໃສ່ແຜນດັດແກ້ໃນປີ ປະຕິບັດໄດ້ 132,46% (ປະຕິບັດໄດ້ເກີນແຜນ), ທຽບໃສ່ປີ 2021 ສາມາດຈັດເກັບລາຍຮັບໄດ້ເພີ່ມຂຶ້ນ 50% ເປັນເງິນ 52,9 ຕື້ກີບ, ໄລຍະ 04ເດືອນປີ 2023 ປະຕິບັດໄດ້35,80ຕື້ກີບທຽບໃສ່ແຜນປີປະຕິບັດໄດ້15,26%, ທຽບໃສ່ໄລຍະດຽວກັນຂອງປີ 2022ສາມາດຈັດເກັບລາຍຮັບໄດ້ເພີ່ມຂຶ້ນ 39% ເປັນເງິນ 10,2 ຕື້ກີບ ແລະ ໃນຄາດຄະເນໃນໄລຍະ 6 ເດືອນຕົ້ນປີ 2023 ຈະສາມາດປະຕິບັດໄດ້ 80,90 ຕື້ກີບ,ເທົ່າ 35% ຂອງແຜນການປີ ການເຕີບໂຕທາງດ້ານເສດຖະກິດລວມຂອງແຂວງມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການຈັດຕັ້ງປະຕິບັດລາຍຮັບງົບປະມານແຫ່ງລັດແຕ່ລະປີ ກໍມີລັກສະນະເພີ່ມຂຶ້ນຢ່າງຕໍ່ເນື່ອງ, ຈາກແຂວງຂາດດຸນໃນແຕ່ລະປີ ກາຍເປັນແຂວງກຸ້ມດຸນດ້ານລາຍຮັບ-ລາຍຈ່າຍງົບປະມານເທື່ອລະກ້າວ. ຜົນສຳເລັດດັ່ງກ່າວ ແມ່ນຍ້ອນການນຳພາ-ຊີ້ນຳໂດຍກົງຂອງອົງການປົກຄອງແຂວງ, ພະແນກການອ້ອມຂ້າງແຂວງ ແລະ ການປະກອບສ່ວນອັນໃຫຍ່ຫຼວງ, ຂອງການຈັດຕັ້ງພັກ-ລັດ. ບຸກຄົນ, ນິຕິບຸກຄົນ, ລັດວິສາຫາກິດ, ລົງທຶນພາຍໃນ ແລະ ຕ່າງປະເທດ ເຄື່ອນໄຫວດຳເນີນທຸລະກິດຢູ່ແຂວງເຊກອງ,ປະຕິບັດພັນທະງົບປະມານຖືກຕ້ອງຕາມລະບຽບກົດໝາຍ, ທັງໝົດເຫຼົ່ານີ້ ແມ່ນຍ້ອນມີນິຕິກຳເປັນບ່ອນອີງ.

2.2 ບັນດາຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ.

- ການສຶກສາອົບຮົມການເມືອງ-ແນວຄິດແລະການເຊື່ອມຊຶມບັນດາມະຕິ, ຄຳສັ່ງຕິດພັນກັບວາລະແຫ່ງຊາດການແກ້ຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ - ການເງິນ ໃນບາງຄັ້ງຍັງບໍ່ທັນເລິກເຊິ່ງ ແລະ ແທດເຖິງກັບທຸກເປົ້າໝາຍຢ່າງແທ້ຈິງ, ການນຳພາແກ້ໄຂສະພາບປາກົດການຫຍໍ້ທໍ້ໃນຂະແໜງການເງິນຍັງເຮັດບໍ່ທັນໄດ້ຢ່າງຂາດຕົວ.

-ການບັງຄັບໃຊ້ກົດໝາຍຍັງບໍ່ທັນເຂັ້ມງວດ, ບາງວຽກງານຍັງມີການຊັກຊ້າແກ່ຍາວ, ສະຕິຂອງຜູ້ປະກອບການຍັງບໍ່ສູງ, ການຜັນຂະຫຍາຍ, ການໂຄສະນາເຜີຍແຜ່ ແລະ ການປະເມີນຊັກຊ້າຍັງບໍ່ເປັນປົກກະຕິ ແລະ ຕໍ່ເນື່ອງ.

- ການຈັດເກັບພາສີທີ່ດິນຍັງຂາດຂໍ້ມູນເນື້ອທີ່ດິນ, ປະເພດທີ່ດິນ ແລະ ການເກັບອາກອນລາຍໄດ້ ຈາກການໂອນສິດນຳໃຊ້ຍັງບໍ່ທັນຖືກຕາມຄວາມເປັນຈິງ ເຮັດໃຫ້ການເກັບລາຍຮັບດັ່ງກ່າວບໍ່ບັນລຸໄດ້ຕາມແຜນການ. ການເກັບຄ່າທຳນຽມນຳໃຊ້ພາຫະນະປະຈຳປີ ຍັງບໍ່ທັນຄົບຖ້ວນທັນຕາມກຳນົດເວລາ.

- ການເລັ່ງທວງໜີ້ສິນຄ້າງມອບງົບປະມານ ເຖິງວ່າຈັດຕັ້ງປະຕິບັດເລັ່ງທວງໄດ້ດີກໍຕາມ, ຍັງມີໜີ້ສິນຈຳນວນໜຶ່ງມີການແກ່ຍາວ ເຊິ່ງໄດ້ຕິດພັນກັບຫຼາຍປັດໄຈຕາມຜົນກວດສອບຂອງຄະນະກວດສອບພາກໃຕ້.

- ການຈັດຕັ້ງປະຕິບັດໂດຍເພາະການປະຢັດ ແລະ ຕ້ານການຟຸມເຟືອຍຕິດພັນກັບລາຍຈ່າຍງົບປະມານໃນປີ2022 ຂອງບັນດາພະແພກການຂະແໜງການ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ເປັນຕົ້ນ ການຮັບແຂກ, ງານລ້ຽງ ແລະ ການລົງຮາກຖານບາງຈຸດມີການຊໍ້າຊ້ອນ.

- ການແກ້ໄຂ ແລະ ເຕົ້າໂຮມພາຫານະລົດລັດບໍລິຫານຍັງບໍ່ສາມາດຈັດຕັ້ງປະຕິບັດສຳເລັດ ໂດຍສະເພາະປະຕິບັດຕາມຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການທ້ອນໂຮມລົດລັດບໍລິຫານຂອງບັນດາພະແນກການ ແລະ ອົງການທຽບເທົ່າ.

- ການປະສານສົມທົບ ບັນດາພະແນກ 4 ຕົວເມືອງ ຍັງມີບາງໜ້າວຽກ ຍັງບໍ່ທັນລະອຽດ ແລະ ຈະແຈ້ງ ເປັນຕົ້ນຂໍ້ມູນຖານລາຍຮັບ.

- ການດຶງດູດ ແລະ ແກ້ໄຂກ່ຽວກັບສິ່ງອຸດຕັນ ແລະ ເປັນຜົນພວງໃນການບໍລິການຕິດພັນກັບດ່ານພາສີສາກົນດ່ານດາກອອກ ເປັນຕົ້ນ ຄົນເຂົ້າ-ອອກເມືອງ ແລະ ການບໍລິການຕ່າງໆ ຍັງມີການຊັກຊ້າຍັງບໍ່ສົມຄູ່ກັບເປັນດ່ານສາກົນ.

**3. ທິດທາງຈຸດສຸມແກ້ໄຂບັນຫາໃນຕໍ່ໜ້າ.**

- ຍົກສູງຄຸນນະພາບການຄຸ້ມຄອງການລົງທຶນ: ປັບປຸງກົນໄກການຄຸ້ມຄອງການລົງທຶນຂອງລັດ, ການຄຸ້ມຄອງການລົງທຶນຂອງພາກເອກະຊົນພາຍໃນແລະຕ່າງປະເທດ ແລະການຄຸ້ມຄອງທຶນຊ່ວຍເຫລືອເພື່ອການພັດທະນາໃຫ້ມີປະສິດທິພາບ, ປະສິດທິຜົນສູງຂຶ້ນກ່ວາເກົ່າ.

- ສູ້ຊົນເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ຕາມແຜນແລະລື່ນຄາດໝາຍແຜນການທີ່ວາງໄວ້ ຕິດພັນກັບມາດຕະການຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານຢ່າງເຄັ່ງຄັດ, ເຂັ້ມງວດ ນຳໃຊ້ເຄື່ອງມືທັນສະໄໝເຂົ້າຊ່ວຍໃນການຄຸ້ມຄອງງົບປະມານໃຫ້ຫລາຍກ່ວາເກົ່າ, ຍົກສູງຄຸນນະພາບການຄຸ້ມຄອງລາຍຈ່າຍງົບປະມານ, ການປະຕິບັດມາດຕະການປະຢັດຕ້ານການຟຸມເຟືອຍໃນກົງຈັກລັດໃຫ້ເກີດຜົນເປັນຈິງຫຼາຍຂຶ້ນ.

-ສືບຕໍ່ສຸມໃສ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃຫ້ເປັນຮູບປະທຳຫລາຍຂຶ້ນ(ກະລຶມ,ດາກຈຶງ ແລະ ລະມາມ) ເລັ່ງໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຜົນສຳເລັດໃນການລົງກໍ່ສ້າງຮາກຖານການເມືອງໃນປີ 2022 ຜ່ານມາ,ໂດຍສະເພາະສຸມໃສ່ປະຕິບັດບັນດາໂຄງການຕ່າງໆທີ່ໄດ້ກຳນົດໃວ້ໃຫ້ເປັນຮູບປະທຳ.

-ວຽກງານຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ແລະ ການພັດທະນາສິນຄ້າໂອດອບ ໃນປີ 2022 ຜ່ານມາໄດ້ມີຜະລິດຕະພັນສິນຄ້າເກີດຂຶ້ນຫຼາຍສົມຄວນ ສາມາດແຂ່ງຂັນໃນຕະຫຼາດພາຍໃນ ພາຍນອກຢ່າງກວ້າງຂ້ວາງ ພວກເຮົາຕ້ອງໄດ້ສືບຕໍ່ເສີມຂະຫຍາຍໃຫ້ແຂງແຮງກວ່າເກົ່າ (ການລ້ຽງສັດເປັນຟາມ, ກາເຟ, ໂສມ, ມັນຕົ້ນແຫ້ງ, ແປ້ງມັນຕົ້ນ, ຣຳດາກຈຶງ, ຫັດຖະກຳຕໍ່າແຜ່ນ, ຈັກສານ, ພຶດຜັກ, ຢາງພາລາ, ຖ່ານຫີນ, ໄຟຟ້າ).

-ວຽກງານພັດທະນາຕົວເມືອງເທສະບານຂອງແຂວງ ແລະ ເທສະບານເມືອງຕ່າງໆ ຕ້ອງສ້າງເມືອງເທສະບານຂອງແຂວງ ໃຫ້ໄດ້ 4 ສ,3 ຄ ແລະ ເມືອງອື່ນໆໃຫ້ສະອາດສວຍງາມ, ສີຂຽວ ແລະ ມີຄວາມສະຫງົບ.

- ວຽກງານຄຸ້ມຄອງສິ່ງແວດລ້ອມທຳມະຊາດ-ສັງຄົມ, ການຟື້ນຟູປ່າໄມ້ ແລະ ປົກປັກຮັກສາປ່າໄມ້ປະເພດຕ່າງໆໃຫ້ຍືນຍົງ ຕິດພັນກັບການແກ້ໄຂຜົນກະທົບຂອງໂຄງການລົງທຶນຕ່າງປະເທດຕໍ່ສະພາບແວດລ້ອມແລະສັງຄົມໃຫ້ມີປະສິດທິພາບ.

-ວຽກງານຍົກສູງຄຸນນະພາບໃນການຄຸ້ມຄອງບໍລິຫານລັດ, ການຫັນເປັນທັນສະໄໝ, ການກະກຽມສ້າງຕັ້ງເມືອງໃໝ່ ແລະ ກະກຽມສະເຫຼີມສະຫຼອງວັນສ້າງຕັ້ງແຂວງເຊກອງ ຄົບຮອບ 40 ປີ.

-ສືບຕໍ່ແກ້ໄຂເຂດເຊື່ອມຕໍ່ ລະຫວ່າງແຂວງເຊກອງກັບແຂວງສາລະວັນ.

- ວຽກງານພັດທະນາການທ່ອງທ່ຽວ ກະກຽມກອງປະຊຸມທ່ອງທ່ຽວເຂດພູພຽງບໍລິເວນ 4 ແຂວງພາກໃຕ້ ໃຫ້ສຳເລັດໃນກາງເດືອນກຸມພາທີ່ຈະມາເຖິງນີ້. ພ້ອມທັງສຸມໃສ່ພັດທະນາພື້ນຖານໂຄງລ່າງ,ຄຸນນະພາບຂອງການບໍລິການຮ້ານອາຫານ, ໂຮງແຮມ, ເຮືອນພັກ ເພື່ອຮອງຮັບການພັດທະນາແຫຼ່ງທ່ອງທ່ຽວຕ່າງໆໃຫ້ສຳເລັດ ແລະ ເພື່ອຕ້ອນຮັບນັກທ່ອງທ່ຽວທີ່ຈະມາທ່ຽວແຂວງເຊກອງນັບມື້ນັບເພີ່ມຂຶ້ນ.

-ການປະຕິບັດຄາດໝາຍຕົວຊີ້ວັດຕ່າງໆຂອງສຶກສາ, ສາທາລະນະສຸກແລະຂົງເຂດອື່ນໆທີ່ຕິດພັນ ໃຫ້ໄດ້ຕາມແຜນການຫຼືໃຫ້ໄດ້ 1 ຫາ 2 ຕົວຊີ້ວັດ ເພື່ອກ້າວໄປເຖິງເຮັດສຳເລັດໃນປີ 2024 ແລະ ປີ 2025.

- ການປະຕິບັດວາລະແຫ່ງຊາດວ່າດ້ວຍມາດຕະການແກ້ໄຂບັນຫາຢາເສບຕິດ ໃນປີມ້ວນທ້າຍ ປີ 2023: ສືບຕໍ່ປະຕິບັດມາດຕະການແກ້ໄຂບັນຫາຢາເສບຕິດ ໂດຍສຸມໃສ່ 5 ວຽກໃຫຍ່ຄື: (1) ສ້າງຄວາມເຂັ້ມແຂງໂປ່ງໃສໃນກຳລັງປ້ອງກັນຄວາມສະຫງົບ (2) ເລັ່ງໃສ່ການປາບປາມຜູ້ຄ້າຂາຍ,ຜູ້ເສບໃຫ້ແຂງແຮງກວ່າເກົ່າ(3)ກະກຽມລົງມືກໍ່ສ້າງສ້ອມແປງສູນບຳບັດຢາເສບຕິດໃຫ້ສຳເລັດໂດຍໄວ (4) ເລັ່ງໃສ່ສ້າງຂະແໜງການກົມກອງຂັ້ນແຂວງ-ເມືອງ ແລະ ສ້າງຄອບຄົວ ສ້າງບ້ານປອດຢາເສບຕິດ (5) ເພີ່ມທະວີການໂຄສະນາຜົນຮ້າຍຂອງຢາເສບຕິດໃຫ້ແຂງແຮງກວ່າເກົ່າ.

ໂອກາດນີ້ ທ່ານຍັງໄດ້ໃຫ້ປະຊາຊົນລາວບັນດາເຜົ່າ ກໍຄືພໍ່ແມ່ປະຊາຊົນບັນດາເຜົ່າຊາວແຂວງເຊກອງ ຈົ່ງພ້ອມກັນສາມັກຄີ ເປັນຈິດໜຶ່ງໃຈດຽວ ຢູ່ອ້ອມຂ້າງພັກແລະລັດເຮົາເພື່ອສືບຕໍ່ປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາໃຫ້ບັນລຸຈຸດໝາຍ ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ, ມີປະຊາທິປະໄຕ, ສີວິໄລ ແລະ ຍຸຕິທຳ.



## ບັນຫາ...

(ຕໍ່ຈາກໜ້າ 4)

ກົດໝາຍ, ຜົນຮ້າຍ ຂອງຢາເສບຕິດ ດ້ວຍຫຼາຍຮູບແບບ ໂດຍເລັ່ງໃສ່ເປົ້າໝາຍກຸ່ມສ່ຽງເປັນຕົ້ນແມ່ນກຸ່ມໃຊ້ແຮງງານ, ນັກຮຽນນັກສຶກສາ, ຖັນແຖວໄວໜຸ່ມຕະຫຼອດຮອດພໍ່-ແມ່ປະຊາຊົນບັນດາເຜົ່າ; ປັບປຸງແບບແຜນວິທີເຮັດວຽກຂອງພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງລັດ ລວມທັງການປະກອບວັດຖຸ, ອຸປະກອນ, ພາຫະນະເຕັກນິກຕ່າງໆ ເພື່ອຮັບໃຊ້ວາລະແຫ່ງຊາດ ໂດຍສະເພາະສຸມໃສ່ ຂັ້ນເມືອງ ຂັ້ນບ້ານ ໃຫ້ຫຼາຍຂຶ້ນ ເພື່ອປະຕິບັດການແກ້ໄຂບັນຫາຢາເສບຕິດຢູ່ຂັ້ນຮາກຖານ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນດີຂຶ້ນ; ສົມທົບແໜ້ນລະຫວ່າງ 3 ຂະແໜງການ (ປ້ອງກັນຄວາມສະຫງົບ, ສາທາລະນະສຸກ ແຮງງານ-ສະຫວັດດີການສັງຄົມ) ເພື່ອແບ່ງຄວາມຮັບຜິດຊອບກັນຢ່າງລະອຽດ, ຈະແຈ້ງໃນການນບຳບັດ-ປິ່ນປົວຜູ້ທີ່ຖືກເຄາະຮ້າຍ, ນັບທັງການເຝິກສີມືແຮງງານ,ສ້າງອາຊີບໃຫ້ເຂົາເຈົ້າເມື່ອເວລາບຳບັດ-ປິ່ນປົວອອກໄປແລ້ວໃຫ້ມີວຽກເຮັດງານທຳ



ເພື່ອເປັນການສ້າງອາຊີບທີ່ໝັ້ນຄົງ, ສ້າງວຽກເຮັດງານທຳໃຫ້ຊາຍໜຸ່ມ ແລະ ຍິງໜຸ່ມ ໃນສັງຄົມໃຫ້ຫຼາຍຂຶ້ນ; ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຊອກວິທີການແກ້ໄຂບັນຫາຄວາມແອອັດຂອງຜູ້ຕ້ອງຫາຢູ່ສະຖານທີ່ຄຸມຂັງຊົ່ວຄາວ ແລະ ສົມທົບກັບຂະແໜງສາທາລະນະສຸກໃນການປະຕິບັດນະໂຍບາຍດ້ານມະນຸດສະທຳຕໍ່ຜູ້ຖືກຕ້ອງຫາ, ນັກໂທດໃນຄະດີຢາເສບຕິດ ແລະ ຄະດີອື່ນໆ ໃຫ້ເຂົາເຈົ້າໄດ້ຮັບການປິ່ນປົວສຸຂະພາບໃນເວລາເຈັບເປັນ.

ໃນນາມຕາງໜ້າໃຫ້ຄະນະສະມາຊິກສະພາແຫ່ງຊາດ ກໍຄື ສະພາປະຊາຊົນຂັ້ນແຂວງ ຂໍສະເໜີມາຍັງອົງການຈັດຕັ້ງພັກ-ລັດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າຕ້ອງໄດ້ພ້ອມກັນສຸມທຸກກຳລັງເພື່ອແກ້ໄຂບັນດາທີ່ເຫັນວ່າພົບຄວາມຫຍຸ້ງຍາກ, ເອົາໃສ່, ຖືສຳຄັນວຽກງານການຈັດຕັ້ງຈັດປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ເພື່ອພ້ອມກັນແກ້ໄຂບາງບັນຫາທີ່ຍັງຄົງຄ້າງ.

# ສະຫຼຸບການກະກຽມກອງປະຊຸມສະໄໝສາມັນ ແລະ ການພົບປະຜູ້ມີສິດເລືອກຕັ້ງຢູ່ແຂວງອຸດົມໄຊ



(ສພຊ) - ເມື່ອບໍ່ດົນມານີ້ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດກອງປະຊຸມສະຫຼຸບການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ສພຂ ຊຸດທີII ແລະການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານ ສພຂ, ມີຮອງປະທານ, ບັນດາທ່ານໃນຄະນະປະຈຳ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ, ທ່ານ ວົງສີ ບຸນທີໃຈ ໄດ້ຕາງໜ້າຄະນະເລຂາທິການ ສພຂ ຜ່ານຮ່າງບົດສະຫຼຸບການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II ເຊິ່ງບົດສະຫຼຸບດັ່ງກ່າວໄດ້ສະແດງອອກດ້ານດີ ຜົນງານທີ່ຍາດຍາດມາໄດ້ ເປັນຕົ້ນ: ໄດ້ດຳເນີນກອງປະຊຸມດ້ວຍຜົນສຳເລັດຢ່າງຈົບງາມ ໃນລະຫວ່າງວັນທີ 9-12 ມັງກອນ 2024, ມີຜູ້ເຂົ້າຮ່ວມທັງໝົດ 163 ທ່ານ ຍິງ 39 ທ່ານ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ສຳເລັດໃນການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມໄດ້ 141 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 10.378 ຄົນ ຍິງ 4.412 ຄົນ ແລະ ສຳເລັດດ້ານວຽກງານອື່ນໆ.

ຫຼັງຈາກນັ້ນ, ກອງປະຊຸມໄດ້ເປີດກວ້າງໃຫ້ຜູ້ເຂົ້າຮ່ວມປະກອບຄຳຄິດຄຳເຫັນ, ແລກປ່ຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເພື່ອກຳໄດ້ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ເພື່ອເປັນການຊອກຫາວິທີທາງແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ, ເອົາເປັນບົດຮຽນໃຫ້ແກ່ການກະກຽມດຳເນີນກອງປະຊຸມ, ການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມ ໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນສະຫຼຸບ, ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະນຳ ແລະ ພະນັກງານທຸກທ່ານ ທີ່ໄດ້ສຸມໃສ່ໃນການກະກຽມ ແລະ ເອົາໃຈໃສ່ໃນການປະສານງານກັບອົງການປົກຄອງແຂວງ, ບັນດາພະແນກການ, ອົງການກ່ຽວຂ້ອງ ເຫັນວ່າເຮັດໄດ້ດີຫຼາຍ ເຊິ່ງສາມາດນຳເອົາເນື້ອໃນ ແລະ ບົດລາຍງານຕ່າງໆ ເຂົ້າຜ່ານໃນກອງປະຊຸມ ເພື່ອໃຫ້ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມ. ການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສຳເລັດຜົນຕາມລະດັບຄາດໝາຍແລະທ່ານໄດ້ເນັ້ນໜັກໃຫ້ພະນັກງານ-ລັດຖະກອນພາຍໃນ ສພຂ ເອົາໃຈໃສ່ເພີ່ມເຕີມໃນການປະສານສົມທົບກັບບັນດາພະແນກການ, ອົງການ ແລະ ບັນດາເມືອງໃຫ້ລະອຽດ, ວ່ອງໄວ ເພື່ອເຮັດໃຫ້ການກະກຽມດຳເນີນກອງປະຊຸມ, ການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ໃຫ້ໄດ້ຮັບຜົນດີຂຶ້ນກວ່າເກົ່າ ແລະ ທັນຕາມກຳນົດເວລາ.

**(ນັກຂ່າວ ສພຂ ອຸດົມໄຊ)**



# ສະພາປະຊາຊົນແຂວງຊຽງຂວາງ ເຊື່ອມຊຶມເອກະສານຂອງພັກ-ຂອງຊາດ



(ສພຊ) - ໃນວັນ 4 ເມສາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ຈັດຕັ້ງເຊື່ອມຊຶມເອກະສານສຳຄັນຂອງພັກ-ຂອງຊາດ ໂດຍການເປັນປະທານຂອງທ່ານ ວຽງໄຊ ສີວິໄລ ກຳມະການພັກແຂວງ ຮອງປະທານ ສພຂ, ມີບັນດາທ່ານຄະນະປະຈຳ ສພຂ, ຄະນະພັກສະພາປະຊາຊົນແຂວງສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ ສພຂ ເຂົ້າຮ່ວມ.

ໃນພິທີ ບັນດາທ່ານຄະນະປະຈຳ ສພຂ ແລະ ຄະນະພັກ ສພຂ ໄດ້ຜັດປ່ຽນກັນຂຶ້ນບັນລະຍາຍບັນດາເອກະສານທີ່ສຳຄັນຂອງພັກ-ຂອງຊາດເຊິ່ງເນື້ອໃນເອກະສານທີ່ນຳມາຈັດຕັ້ງເຊື່ອມຊຶມໃຫ້ພະນັກງານສພຂ ໄດ້ຮັບຮູ້ ແລະ ເຂົ້າໃຈມີຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 69 ປີ, ເອກະສານວັນນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 78 ປີ ແລະ ເອກະສານວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນຄົບຮອບ 63 ປີ ເພື່ອໃຫ້ພະນັກງານ ສພຂ ໄດ້ຮັບຮູ້, ເຊື່ອມຊຶມ ແລະ ກຳແໜ້ນເນື້ອໃນດັ່ງກ່າວ, ເພື່ອທົບທວນມູນເຊື້ອ ແລະ ໄຊຊະນະອັນຍິ່ງໃຫຍ່ຂອງການປະຕິວັດໂດຍພາຍໃຕ້ການນຳພາ-ຊີ້ນຳຂອງພັກປະຊາຊົນປະຕິວັດລາວ ແລະ ລະນຶກວັນນັກຮົບເສຍອົງຄະແລະເສຍສະຫຼະຊີວິດເພື່ອປະເທດຊາດ, ສືບຕໍ່ເສີມຂະຫຍາຍມູນເຊື້ອ ແລະ ທາດແທ້ຂອງພັກເຂົ້າໃນການນຳພາ-ຊີ້ນຳຈັດຕັ້ງປະຕິບັດພາລະກິດປ່ຽນແປງໃໝ່, ໄດ້ຮັບຮູ້ ແລະ ເຊື່ອມຊຶມມູນເຊື້ອປະຫວັດສາດ, ສ້າງຄວາມຮັບຮູ້ຢ່າງເລິກເຊິ່ງເຖິງຄວາມປີຊາສາມາດ ແລະ ຄວາມສະຫຼາດຫຼັກແຫຼມຂອງພັກເຮົາໃນຂະບວນການຕໍ່ສູ້ປົດປ່ອຍຊາດ.

ໃນພິທີ, ທ່ານ ວຽງໄຊ ສີວິໄລ ໄດ້ມີຄຳເຫັນໂອ້ລົມຕໍ່ພິທີ ກໍຄືສະມາຊິກພັກ-ພະນັກງານ ສພຂ ຈົ່ງນຳເອົາເນື້ອໃນເອກະສານທີ່ໄດ້ເຊື່ອມຊຶມນັ້ນໄປຈັດຕັ້ງຜັນຂະຫຍາຍໃຫ້ເປັນແຜນວຽກງານອັນລະອຽດ, ສືບຕໍ່ເນັ້ນໃຫ້ພະນັກງານ ສພຂ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ໃຫ້ມີສະຕິຕໍ່ການຈັດຕັ້ງ, ປັບປຸງແບບແຜນວິທີເຮັດວຽກໃຫ້ດີຂຶ້ນກວ່າເກົ່າ.

**(ນາງ ສຸກສະຫວັນ ອິນທະແສງ)**

## ຕິລາຄາ...

(ຕໍ່ຈາກໜ້າ 5)

ເມືອງ, ຂັ້ນກຸ່ມບ້ານໃນເວລາລົງເຄື່ອນໄຫວຢູ່ບັນດາເມືອງ.

●ຂໍ້ຫຍຸ້ງຍາກ ຂອງ 2 ວາລະແຫ່ງຊາດ.

1. ການສ້າງຄວາມຮັບຮູ້ເຂົ້າໃຈຕໍ່ເນື້ອໃນຄວາມໝາຍຄວາມສຳຄັນຂອງ 2 ວາລະແຫ່ງຊາດໃນທົ່ວສັງຄົມ ບໍ່ທັນທົ່ວເຖິງ,ບໍ່ເລິກເຊິ່ງ;

2. ການປັບປຸງ ແລະ ສ້າງນິຕິກຳໃຕ້ກົດໝາຍຈຳນວນໜຶ່ງທີ່ກ່ຽວພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຈຳນວນຫນຶ່ງບໍ່ທັນຄົບຖ້ວນ ເປັນຊ່ອງວ່າງພາໃຫ້ການຈັດຕັ້ງປະຕິບັດມີຄວາມຫຍຸ້ງຍາກ;

3. ການສຳຫຼວດເກັບກຳຂໍ້ມູນຕ່າງໆ ກ່ຽວກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຍັງບໍ່ທັນລະອຽດ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນຮາກຖານ;

4. ຍັງຂາດວິຊາການ ແລະ ເຕັກໂນໂລຊີທີ່ດີມີຄຸນນະພາບໃນການຊຸກຍູ້ສົ່ງເສີມຜູ້ປູກ, ຜູ້ລ້ຽງ;

5. ການເກັບກຳຂໍ້ມູນ ແລະ ຂຶ້ນບັນຊີເປົ້າຫມາຍທີ່ພົວພັນຢາເສບຕິດເບື້ອງຕົ້ນບໍ່ລະອຽດ, ຈະແຈ້ງ ພາໃຫ້ການ ແກ້ໄຂບໍ່ຖືກເປົ້າໝາຍ, ການວິໄຈ, ດຳເນີນຄະດີຊັກຊ້າ, ງົບປະມານມີຈຳກັດ ບໍ່ມີສູນບຳບັດຮອງຮັບ, ຜູ້ຕິດຢາເສບຕິດຍັງປົນເປກັບຜູ້ຖືກຫາຈຳນວນຫຼາຍ;

6. ການຈັດຕັ້ງຕ່າງໆ ຢູ່ຂັ້ນຮາກຖານ ຫຼາຍບ່ອນ ບໍ່ທັນເຂັ້ມແຂງ, ກອງຫຼອນ, ປກສ ຈຳນວນໜຶ່ງພົວພັນກັບບັນຫາຢາເສບຕິດ ແລະ ສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ; ພ້ອມນີ້, ບ້ານ, ຄອບຄົວ, ພໍ່ແມ່ປະຊາຊົນຈຳນວນໜຶ່ງ ຍັງບໍ່ທັນເຊື່ອມຊຶມເຂົ້າໃຈກ່ຽວກັບລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດ. ຈຳນວນໜຶ່ງບໍ່ທັນກ້າລາຍງານຂໍ້ມູນກຸ່ມເປົ້າໝາຍ ໂດຍສະເພາະກຸ່ມຂາຍ;

**III. ຂໍ້ສະເໜີຫາອົງການຈັດຕັ້ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ.**

1. ສະເໜີຫາອົງການຈັດຕັ້ງ, ພາກສ່ວນທີ່ກ່ຽວຂ້ອງ ແລະ ພໍ່ແມ່ປະຊາຊົນ ໃຫ້ເຂັ້ມງວດໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ລະບຽບກົດໝາຍໃຫ້ເຂັ້ມງວດກວ່າເກົ່າ;

2. ສະເໜີຫາອົງການຈັດຕັ້ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງຢ່າງເຂັ້ມງວດຕາມພາລະບົດບາດ, ສິດ ແລະ ໜ້າທີ່.

3. ສະເໜີໃຫ້ລັດຖະບານມີແນວທາງຮັດກຸມເພີ່ມຕື່ມ ໃນການຈັດສັນໂຄງການລົງທຶນຂອງລັດ ໃຫ້ລົງເລິກໃສ່ວຽກງານການປູກ-ການລ້ຽງ ຕິດພັນກັບຮາກຖານບ້ານ. (ໄລຍະຜ່ານມາ ສ່ວນໂຄງການໃຫຍ່ໆ, ມູນຄ່າຫຼາຍ ແມ່ນມີແຕ່ໂຄງການກໍ່ສ້າງພື້ນຖານໂຄງລ່າງສ່ວນໂຄງແກ້ໄຂເລື່ອງປາກ-ທ້ອງແມ່ນມີໜ້ອຍ ແລະ ມູນຄ່າກະບໍ່ສູງ).

ໂອກາດນີ້, ທ່ານຍັງໄດ້ສະເໜີມາຍັງປະຊາຊົນລາວບັນດາເຜົ່າ ຊາວແຂວງໄຊສົມບູນ ຈົ່ງພ້ອມກັນສາມັກຄີເປັນຈິດໜຶ່ງໃຈດຽວ ສືບຕໍ່ປົກປັກຮັກສາ ແລະ ສ້າງສາປະເທດຊາດ ເວົ້າລວມ, ເວົ້າສະເພາະແຂວງໄຊສົມບູນ ໃຫ້ບັນລຸຈຸດໝາຍ: ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ, ມີປະຊາທິປະໄຕ ແລະ ຍຸຕິທຳ ແລະ ຈົ່ງມີສະຕິໃນການນຳໃຊ້ສື່ສັງຄົມອອນລາຍຮັບຮູ້ຂໍ້ມູນຂ່າວສານທີ່ເປັນປະໂຫຍດ, ຕອບຕ້ານການໃສ່ຮ້າຍປ້າຍສີຂອງກຸ່ມຄົນທີ່ບໍ່ຫວັງດີຕໍ່ພັກ-ລັດຂອງພວກເຮົາ; ຂ້າພະເຈົ້າເຫັນວ່າ ການພັດທະນາປະເທດຊາດ ບໍ່ປາສະຈາກສິ່ງທີ່ກະທົບຕໍ່ປະຊາຊົນ, ເພາະວ່າ ຖ້າມີການພັດທະນາແນ່ນອນຕ້ອງມີຜົນກະທົບຖ້າບໍ່ຢາກໃຫ້ມີຜົນກະທົບແມ່ນຕ້ອງບໍ່ພັດທະນາ, ແຕ່ຖ້າບໍ່ພັດທະນາແນ່ນອນບໍ່ມີຄວາມຈະເລີນ ສະນັ້ນ, ຂ້າພະເຈົ້າໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າຊາວແຂວງໄຊສົມບູນ ຂໍຮຽນສະເໜີໃຫ້ພໍ່ແມ່ນປະຊາຊົນເຮົາຈົ່ງເຂົ້າໃຈ ແລະ ເຫັນອົກເຫັນໃຈພັກ-ລັດ.




# ຄຸນຄ່າ ແລະ ມູນຄ່າ ຂອງຄວາມຮູ້

# ດັ້ນກົບເມກ

ຄວາມຮູ້-ສະຕິປັນຍາຂອງມະນຸດ ເປັນສິ່ງສຳຄັນຕໍ່ການພັດທະນາຄົນແລະສັງຄົມດັ່ງນັ້ນ ຫຼາຍປະເທດຈະເລີນຂອງໂລກ ເຂົາຈຶ່ງໃຫ້ຄວາມສຳຄັນທີ່ສຸດຕໍ່ການສົ່ງເສີມການຄົ້ນຄວ້າ-ຂຽນ ແລະ ພິມໜັງສື, ຮັກສາໜັງສືຕຳລາໄວ້ຍາວນານ ຈຶ່ງເວົ້າໄດ້ວ່າ: ເປັນການສະສົມຄວາມຮູ້ ແລະ ປັນຍາສົ່ງຕໍ່ໃຫ້ຄົນຮຸ່ນຕໍ່ຮຸ່ນ ສະເພາະບ້ານເຮົາປະຫວັດສາດໄດ້ຢັ້ງຢືນໃຫ້ເຫັນວ່າອະດີດເຮົາມີການສະສົມ, ຂີດຂຽນ, ເກັບມ້ຽນສິ່ງເສີມ ນັກປາດອາຈານ, ສ້າງຫໍໄຕ (ຫໍສະໝຸດ) ເກັບມ້ຽນຮັກສາ ເອກະສານຈະແຈ້ງ ເຊິ່ງຊີ້ບອກແຈ້ງວ່າ ພວກເພິ່ນເຫັນຄວາມສຳຄັນຕໍ່ການສ້າງ-ພັດທະນາສະຕິປັນຍາ.

ການສະສົມຕຳລາ, ໜັງສື, ເອກະສານບູຮານ, ຈາລຶກຕ່າງໆ ໂດຍການປຸກສ້າງຫໍ, ອາຄານແໜ້ນໜາເກັບມ້ຽນ, ສົ່ງເສີມຄົນໃນຊາດຮັກສາການຄົ້ນຄວ້າ ຄິດວ່າເປັນແນວທາງທີ່ດີ ຫຼື ອາດດີກວ່າບາງບ່ອນ ແລະ ບາງແຫ່ງ ມີຕຳລາໜັງສືໃສ່ຕູ້ໃສ່ກຸນແຈໄວ້ໂຊຊື່ງ ແລ້ວມັນຈະມີປະໂຫຍດຕໍ່ຄົນເຮົາໄດ້ແນວໃດ? ສົ່ງເສີມ-ຮັກສາຄວາມຮູ້ ພູມປັນຍາລາວຢ່າງຕໍ່ເນື່ອງ ອາດຜ່ານຫຼາຍຮູບແບບເຊັ່ນ: ຄູອາຈານ, ນັກວິຊາການ, ນັກຄົ້ນຄວ້າ ຮັກຫອມພັດທະນາຄວາມຮູ້ຕໍ່ເນື່ອງ ຈັດພິມສິ່ງທີ່ຄົ້ນຄວ້າ ບໍ່ແມ່ນປະເພດເຄິ່ງດິບເຄິ່ງແດງ ສ້າງພາບຢາກໂດດເດັ່ນ ເຮົາເຫັນຕົວຢ່າງ ນັກຂຽນ ຫຼື ນັກປະພັນບາງຄົນ ມີຜົນງານຂຽນສອງສາມສີ່ຫົວ ຫຼື ຫົວດຽວກໍດັງ-ດີເດັ່ນຮັບໃຊ້ສັງຄົມຫຼາຍຮ້ອຍປີມາແລ້ວ ຍົກຕົວຢ່າງ ປາງຄຳອາດຂຽນແຕ່ເລື່ອງສິນໄຊ ແຕ່ກໍຮັບໃຊ້ສັງຄົມຫຼາຍຮ້ອຍປີ, ການສະສົມຄວາມຮູ້ຜ່ານການປົກປັກຮັກສາ-ສົ່ງເສີມ ສ້າງອາຄານແໜ້ນໜາ ເກັບມ້ຽນເຊີດຊູກໍແມ່ນວິທີໜຶ່ງໄດ້ຜົນສູງຄືກັນ ຜູ້ຂຽນຮູ້ເຫັນບົດຮຽນ ບາງປະເທດເຂົາສ້າງອາຄານຮຽນ, ອາຄານຮັກສາຕຳລາ ສົ່ງເສີມນັກຄົ້ນຄວ້າ, ສົ່ງເສີມຈັດພິມເພື່ອໃຫ້ສັງຄົມໄດ້ອ່ານ, ຊ່ວຍພັດທະນາຊັບພະຍາກອນມະນຸດໄດ້ດີວິທີໜຶ່ງ.

ສັງລວມໄດ້ວ່າ ຄຸນຄ່າ ແລະ ມູນຄ່າໜັງສືຕຳລາ ເກັບກຳເອົາຄວາມຮູ້ວິຊາການ ພູມປັນຍາ ສືບທອດຮຸ່ນຕໍ່ຮຸ່ນໄດ້ນັ້ນ ເປັນການສົ່ງເສີມການສຶກສາສຳຄັນຍິ່ງ ໃຫ້ແກ່ການສ້າງຊາດ ຖ້າວ່າເຮົາມົວແຕ່ຄິດໄດ້ໃຈແຄບ ຢ້ານແຕ່ເຂົາດີກວ່າເດັ່ນກວ່ານັ້ນພັດທະນາໄດ້ຍາກ, ຖ້າຄົນເກັ່ງໄດ້ຄຸນນະພາບ ກໍຄືງກ້າວຄຽງໄດ້ສາກົນເຂົາດີກວ່າເກົ່າ.







# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

ແຕ່ວ່າພະນັກງານພວກເຮົາຊ້ຳພັດດື້ງົມເຮັດແນວເກົ່າ. ສິ່ງທີ່ບໍ່ເໝາະສົມກໍບໍ່ກ້າແກ້ໄຂ ຫຼື ເລີກຖິ້ມ, ສິ່ງທີ່ຕ້ອງການກໍບໍ່ກ້າວາງອອກມາເຮັດເອົາໃໝ່, ນັ້ນແມ່ນເປັນຍ້ອນນິດໄສບໍ່ຮັບຜິດຊອບ ແມ່ນຫົວຄິດພົບອັນໃດ ເຮັດອັນນັ້ນ.

ດ້ານໜຶ່ງຊ້ຳພັດມີທ່າທີຫ່າງໄກປະຊາຊົນ, ມີນິໄສບໍ່ຮັບຜິດຊອບທາງຊ້າຍຈັດ, ເຮັດອັນໃດກໍບໍ່ຄິດຄັກແນ່, ບໍ່ປຽບທຽບຊັ່ງຊາຄັກແນ່, ມື້ນີ້ວາງອອກອັນນີ້, ມື້ອື່ນວາງອອກອັນອື່ນ ເຮັດໃຫ້ປະຊາຊົນກະວົນກະວາຍ. ອັນນັ້ນກໍຊ້ຳພັດບໍ່ດີ.

7. ໃກ້ຊິດປະຊາຊົນ ເໝາະສົມກັບປະຊາຊົນ:

ພະນັກງານພວກເຮົາຍັງມີພະຍາດສອງຢ່າງຄື:

ກ) ພະຍາດເປີດກອງປະຊຸມ. ເປີດກອງປະຊຸມບໍ່ມີແຜນການ, ບໍ່ກະບໍ່ກຽມຄັກແນ່, ບໍ່ແທດເຖິງຄວາມຈິງ, ເປີດກອງປະຊຸມດົນໂພດ ແລະ ຫລາຍເທື່ອ.

ອ່ານຕໍ່ສະບັບໜ້າ...




# ອະທິດຖານ – ປະນິທານ

'ອະທິດຖານ' ແລະ 'ປະນິທານ' ເປັນສອງຄຳທີ່ມີຄວາມໝາຍອ່າວໃກ້ຄຽງກັນ ແຕ່ໃຊ້ຕ່າງກັນດັ່ງນີ້:

'ອະທິດຖານ' ເປັນຄຳຈາກເຄົ້າປາລີ Adhiṭṭhāna ອະທິດຖານະ ແລະສັນສະກິດ Adhiṣṭhāna (अधिष्ठान) ຕາມຄວາມໝາຍເດີມແມ່ນ "ຄວາມຕັ້ງໃຈໝັ້ນ, ການຕັດສິນໃຈເດັດດ່ຽວ, ຄວາມຕັ້ງໃຈແນ່ວແນ່ທີ່ຈະເຮັດໃຫ້ສຳເລັດຕາມຈຸດໝາຍ; ເປັນປາລະມີຢ່າງໜຶ່ງໃນພຸດທະສາສະໜາ ຮຽກວ່າ ອະທິດຖານປາລະມີ".

ໃນວັດຈະນານຸກົມພາສາລາວ ໄດ້ໃຫ້ຄວາມໝາຍ 'ອະທິດຖານ' ວ່າ ເປັນຄຳກິລິຍາ ໝາຍເຖິງ "ຕັ້ງໃຈມຸ່ງຫວັງຫາຢ່າງໃດຢ່າງໜຶ່ງ, ຕັ້ງໃຈປາຖະໜາ" ເຊັ່ນ

- ຂ້ານ້ອຍຂໍຕັ້ງຈິດອະທິດຖານ.
- ຄູ່ບ່າວສາວໄດ້ອະທິດຖານໃຫ້ຄວາມຮັກຂອງພວກເຂົາທັງສອງຈົ່ງຍືນຍາວໝັ້ນຊົ່ວຟ້າດິນສະຫຼາຍ.

ແຕ່ໃນການໃຊ້ຕົວຈິງ 'ອະທິດຖານ' ມັກສະກົດຜິດເປັນ 'ອະທິຖານ' ແລະໃຊ້ໃນຄວາມໝາຍວ່າ "ຕັ້ງຈິດຂໍຮ້ອງວິງວອນຕໍ່ສິ່ງສັກສິດເພື່ອໃຫ້ຕົນໄດ້ຮັບຜົນສຳເລັດຢ່າງໃດຢ່າງໜຶ່ງ" ເຊັ່ນ

- ຂໍອະທິດຖານໃຫ້ສິ່ງສັກສິດຈົ່ງດົນບັນດານໃຫ້ຜູ້ຂ້າຈົ່ງປະສົບຜົນສຳເລັດໃໝ່ຍິ່ງໃຫຍ່ກວ່າເກົ່າ.

'ປະນິທານ' ເປັນຄຳຈາກເຄົ້າປາລີ Paṇidhāna ປະນິທານະ ແລະ ສັນສະກິດ Praṇidhāna (प्रणिधान) ໝາຍເຖິງ "ການຕັ້ງເປົ້າໝາຍ, ການຕັ້ງຄວາມປາຖະໜາ"

ໃນວັດຈະນານຸກົມພາສາລາວ ໄດ້ໃຫ້ນິຍາມ 'ປະນິທານ' ວ່າ ເປັນຄຳນາມ ໝາຍເຖິງ "ການຕັ້ງໃຈມຸ່ງຫວັງ ຫາຢ່າງໃດຢ່າງໜຶ່ງ, ການຕັ້ງໃຈປາຖະໜາ" ເຊັ່ນ

- ຖ້າເຮົາຕັ້ງປະນິທານໄວ້ ແຕ່ບໍ່ລົງມືເຮັດ ກໍບໍ່ມີມື້ຈະສຳເລັດໄດ້ຈັກເທື່ອ.
- ເຮັດວຽກໂດຍບໍ່ຕັ້ງປະນິທານ ກໍສ່ຳກັບເຮັດວຽກແບບບໍ່ມີເປົ້າໝາຍ.
- ຢ່າພຽງແຕ່ຕັ້ງປະນິທານ ແຕ່ຈົ່ງຕັ້ງໃຈເຮັດວຽກໄປພ້ອມໆກັນ.



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ບັດໄຈ | ບັດໃຈ |
| ວິໄຈ | ວິໃຈ |
| ສົງໄສ | ສົງໃສ |
| ນິດໄສ | ນິດໃສ |
| ອາໄສ | ອາໃສ |
| ນົກໄສ່ | ນົກໃສ່ |
| ຢອກໄຍ | ຢອກໃຍ |
| ໄຊ້ໜີ້ | ໃຊ້ໜີ້ |
| ສິ້ນໄໝ | ສິ້ນໃໝ |



ສຸຂະສະບາຍທາຍໂລດ

# 3 ພະຍາດ ທີ່ຫົວຜັກທຽມ ສາມາດປ້ອງກັນໄດ້

ໂດຍ: ທິວາກໍ່

ຫົວຜັກທຽມ ເປັນພືດຢາພື້ນເມືອງທີ່ຖືກນຳມາໃຊ້ເປັນທັງອາຫານ ແລະ ຢາມາຫຼາຍສິບພັນປີ ຫົວຜັກທຽມຖືກນຳມາໃຊ້ເປັນສ່ວນປະກອບຂອງອາຫານແລ້ວ ຍັງຖືກນຳມາໃຊ້ໃນການປ້ອງກັນພະຍາດຮ້າຍຫຼາຍຢ່າງເຊັ່ນ: ຊ່ວຍຫຼຸດໄຂມັນ, ຫຼຸດຄວາມດັນຂອງເລືອດ ແລະ ຊ່ວຍໃຫ້ລະບົບພູມຄຸ້ມກັນໃຫ້ດີຂຶ້ນ ເຊິ່ງມື້ນີ້ຈະມາແນະນຳພະຍາດທີ່ຫົວຜັກທຽມສາມາດປ້ອງກັນໄດ້ຄື:



**1. ພະຍາດຫົວໃຈ (Heart disease):** ຫົວຜັກທຽມສາມາດປ້ອງກັນບໍ່ໃຫ້ເກີດພະຍາດຫົວໃຈໄດ້ ໂດຍຫຼຸດການເກີດເສັ້ນເລືອດແຂງ (artherosclerosis) ແລະ ຍັງສາມາດຫຼຸດລະດັບຄວາມດັນລົງໄດ້ປະມານ 7-8%; ຈາກການສຶກສາເປັນເວລາດົນເຖິງ 4 ປີ ໃນການໃຊ້ຫົວຜັກທຽມ 900 ມິນລີກຣາມທຸກມື້ ປະກົດວ່າມັນສາມາດຫຼຸດການເກີດຂອງເສັ້ນເລືອດແຂງໄດ້; ນອກຈາກນັ້ນ, ຫົວຜັກທຽມຍັງມີສານຕ້ານການຈັບຕົວເປັນກ້ອນຂອງເລືອດດ້ວຍການເຮັດໃຫ້ເມັດເລືອດບາງລົງ ອາດປ້ອງກັນບໍ່ໃຫ້ເກີດພາວະຫົວໃຈຂາດເລືອດ(heart attack) ຫຼື ສະໝອງຂາດເລືອດ (stroke).

**2. ໄຂ້ຫວັດ (Common cold):** ຈາກຜົນການສຶກສາໃນໄລຍະທຳອິດພົບວ່າ ຫົວຜັກທຽມສາມາດຊ່ວຍປ້ອງກັນພະຍາດຫວັດໄດ້ໂດຍມີການສຶກສາປຽບທຽບການໃຊ້ຫົວຜັກທຽມໃນໄລຍະທີ່ເປັນຫວັດລະບາດພົບປາກົດວ່າຄົນທີ່ກິນຜັກທຽມຈະເປັນຫວັດໄດ້ໜ້ອຍກວ່າຄົນທີ່ບໍ່ກິນຜັກທຽມເລີຍ;ນອກຈາກນັ້ນ, ໃນລະຫວ່າງເປັນຫວັດຜັກທຽມສາມາດເຮັດໃຫ້ອາການເປັນຫວັດດີໄວຂຶ້ນ.

**3. ພະຍາດມະເຮັງ (Cancer):** ຫົວຜັກທຽມເຮັດໃຫ້ລະບົບພູມຕ້ານທານໃຫ້ແຂງແຮງຂຶ້ນ ສາມາດຊ່ວຍໃຫ້ຕໍ່ສູ້ກັບພະຍາດມະເຮັງໄດ້ ໂດຍຜົນຈາກຫ້ອງທົດລອງໃຫ້ຮູ້ວ່າ: ໃນກຸ່ມຄົນເປັນໄລຍະເວລາອັນຍາວນານພົບວ່າ ກຸ່ມຄົນທີ່ກິນຜັກທຽມສົດ ຫຼືຫົວຜັກທຽມທີ່ປຸງແຕ່ງໃນອາຫານ ເຮັດໃຫ້ມີພູມຕ້ານທານບໍ່ໃຫ້ເກີດເປັນມະເຮັງ ໂດຍສະເພາະມະເຮັງຂອງລຳໄສ້ໃຫຍ່ (colon) ແລະ ມະເຮັງກະເພາະອາຫານ (CA stomach)

**ຂໍ້ມູນຈາກ:**
**www.kidork.com**




## ຫອມກິ່ນຈຳປາ

**# ອາຈານບົວຄຳ**

❊ ຫອມເດ ດວງດອກໄມ້
ຈຳປາຂາວແສນງາມ
ສາຍລົມລວງຕີຕ້ອງ
ແດນດົງດອນບ່ອນບ້ານ

ໃນມິ່ງເມືອງລາວ
ຢູ່ນາຜືນກວ້າງ
ອາຍລະອອງໄປທົ່ວ
ສະຖານແຄວ້ນຖິ່ນເນົາ

❊ ດຸດັ່ງດາວເດັ່ນຟ້າ
ຍາມລົງແລງອອນຊອນ
ຫຼຽວລໍ່າມອງຜົມເກົ້າ
ບອກວ່າງາມເລີດລໍ້າ ຈຳປາບານສຽບເກົ້າ

ພາຮຸ່ງເຮືອງແສງ
ບ່າວສາວລຳກ້ຽວ
ຊຸມສາວເໜັບດອກ
ສາວລາວຍິ້ມຊື່ນໃຈ ແທ້ນາ

❊ ລຽບເລາະຕາມຮົ້ວ
ມອນແມງບິນຕອມຕາມ
ຕະລຸມດູດເອົານໍ້າ
ຕົກລົງດິນບ່ອນເບື້ອງ

ນາໄຮ່ໃນສວນ
ດອກຈິຈອມຈຸ້ມ
ເກສອນຫອມອ່ອນ
ໂຮຍພື້ນແຜ່ນທະລັງ ງາມເດ

❊ ຍາມສິງການເພິ່ນເອ້
ງານສຳຄັນບາສີ
ເພິ່ນເອົາຈຳປາຄ້ອງ
ລໍ່າຫຼິງດູອາດເອ້

ດວງດອກຫຼາຍສີສັນ
ສູ່ຂວັນຂານເອີ້ນ
ບູຊາງາມຍິ່ງ
ຊົມແລ້ວຊື່ນໃຈ

❊ ຍາມເມື່ອໄກຫ່າງບ້ານ
ໃຈຄະນຶງຫວນຫາ
ສາຍລົມລ່ວງຜານຕ້ອງ
ຄິດເຖິງດິນຖິ່ນບ້ານ

ຖານຖິ່ນເຄີຍອາໄສ
ທົ່ງນາແດນກວ້າງ
ລະອອງຫອມດອມກິ່ນ
ສະຖານເບື້ອງບ່ອນເນົາ ແທ້ນາ!






## ຟັງສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❊ **ຊົມ**ເຊີຍ! ວັນກຳມະກອນສາກົນ **(1 ພຶດສະພາ 1886-1 ພຶດສະພາ 2024)** ຄົບຮອບ **138 ປີ** ໂອກາດນີ້ ຂໍໃຫ້**ຊາວຜູ້ອອກແຮງງານ** ກໍຄື**ກຳມະກອນ**ທົ່ວຫຼ້າ ມີອາຍຸຍືນຍາວ ກາຍ ແລະ ໃຈສຸກສົມ ເຂັ້ມແຂງແຮງກ້າ ສົມດັ່ງປາຖະໜາແມ້ງ ມະໂນໃນໃສສົດຊື່ນ ທຸກວັນຄືນຄ່າເຂົ້າ **ເຂົ້າເງິນຄ່າເຄື່ອງໃຊ້** ໄຫຼມາແໜ້ນອັ່ງຢູ່ຖົງ **ທຸກທ່ານເນີ!**

❊ **7** ວັນໄລຍະສະເຫຼີມສະຫຼອງສົ່ງທ້າຍປີເກົ່າແລະຕ້ອນຮັບປີໃໝ່ລາວ ມີຂ່າວແຈ້ງໃຫ້ຮູ້ວ່າ ເລີ່ມແຕ່ **11-17 ເມສາ 2024** ມີອຸບັດເຫດເກີດຂຶ້ນ ທົ່ວປະເທດ **316 ລາຍ** ທຽບໃສ່ປີຜ່ານມາ ຖືວ່າຫຼຸດລົງ **26 ລາຍ** ໃນນັ້ນ, ມີພາຫະນະເປ່ເພ **567 ຄັນ** ບາດເຈັບ **54 ຄົນ** ແລະ ເສຍຊີວິດ **33 ຍິງ 4 ຄົນ** ເຈົ້າໜ້າທີ່ຍັງແຈ້ງໃຫ້ຮູ້ຕື່ມອີກວ່າ ສະເພາະນະຄອນຫຼວງວຽງຈັນ ມີອຸບັດເຫດ **37 ລາຍ** ເປ່ເພ **78 ຄັນ** ບາດເຈັບ **4 ຄົນ** ແລະ ເສຍຊີວິດ **4 ຄົນ**. ຕາມວັນ ແລະ ເວລາດັ່ງກ່າວ ຂ່າວຍັງແຈ້ງໃຫ້ຮູ້ວ່າ ແຂວງ**ທີ່ເກີດອຸບັດເຫດຫຼາຍກວ່າໝູ່**ແມ່ນ ວຽງຈັນ, ຈຳປາສັກ ແລະ ນະຄອນຫຼວງ... ສ່ວນ**ສາເຫດຕົ້ນຕໍ**ແມ່ນຂັບຂີ່ລົດໄວເກີນກຳນົດ, ດື່ມສິ່ງມຶນເມົາ, ສະພາບເຕັກນິກບໍ່ຮັບປະກັນຄວາມປອດໄພ ແລະ ບໍ່ຮຽນທິດທາງໄປໂດຍບໍ່ລະມັດລະວັງ.

## ຊອບຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ຍັງຮັກຄືເກົ່າ

ຫຼັງຈາກເກີດອຸບັດເຫດ ເມຍໄດ້ເຂົ້າຫ້ອງຜ່າຕັດ ພ້ອມກັບຜົວ, ທ່ານໝໍໄດ້ປາດເອົາໜັງກົ້ນຜົວໄປຕາບແກ້ມເມຍ, 6 ເດືອນຜ່ານໄປ ເມຍຫາຍດີເປັນປົກກະຕິເກືອບວ່າງາມຄືເກົ່າ.

**ເມຍ:** ນ້ອງດີໃຈທີ່ມີອ້າຍ, ຖ້າອ້າຍບໍ່ເສຍສະຫຼະ ນ້ອງກະຄືຊິບໍ່ງາມຄືນແບບນີ້ດອກ!
**ຜົວ:** ບໍ່ເປັນຫຍັງດອກທີ່ຮັກ ເພື່ອນ້ອງອ້າຍເຮັດໃຫ້ຢູ່ແລ້ວ
**ເມຍ:** ແຕ່ນ້ອງກະແປກໃຈວ່າເປັນຫຍັງດຽວນີ້ ອ້າຍຄືບໍ່ຫອມແກ້ມນ້ອງຄືເກົ່າ ຫຼື ອ້າຍເຊົາຮັກນ້ອງແລ້ວ?
**ຜົວ:** ຍັງຮັກຄືເກົ່າຫັ້ນລະ ພຽງແຕ່ອ້າຍບໍ່ຫອມແກ້ມນ້ອງຊື່ໆ
**ເມຍ:** ເປັນຫຍັງຈຶ່ງບໍ່ຫອມ?
**ຜົວ:** ຊິໃຫ້ຫອມຈັ່ງໃດ ກະແບວ່າກົ້ນອ້າຍເອງ
**ເມຍ:** !!!???

## ຄະຕິເຕືອນໃຈ

**#ດອກຫຍ້າ**

ຊາດທີ່ມະຫາບິນແກ້ວ
ມະຫາບິນລູກປະເສີດ
ຫາກບໍ່ມີຄ່າຫຸ້ມຫໍ່ແກ້ວ
ມະນີເຈົ້າກໍ່ບໍ່ເຮືອງ

ລັດຖະສະພາຕ່າງປະເທດ

# ປະທານາທິບໍດີ ມານດີບ ໃຫ້ສັດຕະຍາບັນຮ່າງກົດໝາຍ

## ບັງຄັບໃຫ້ຜູ້ປ່ຽນພັກຕ້ອງສູນເສຍທີ່ນັ່ງ



ໃນວັນອັງຄານ 10 ເມສາຜ່ານມາ ທ່ານ ໂມຮຳເໝັດ ມຸອິຊຊຸ (Mohamed Muizzou) ປະທານາທິບໍດີມານດີວ ຫຼື ມານດີບ ໄດ້ໃຫ້ສັດຕະຍາບັນຮ່າງກົດໝາຍຕໍ່ຕ້ານການຫຼົບໜີ (Anti-Defection Bill) ເຊິ່ງໃຫ້ອຳນາດບັງຄັບໃຊ້ທາງກົດໝາຍກັບບັນດາສະມາຊິກສະພານິຕິບັນຍັດ ທີ່ຈະສູນເສຍທີ່ນັ່ງໃນລັດຖະສະພາ ເມື່ອປ່ຽນພັກ.

ໃນຖະແຫຼງການຂອງຫ້ອງວ່າການສຳນັກງານປະທານາທິບໍດີລະບຸວ່າ ຮ່າງກົດໝາຍດັ່ງກ່າວໄດ້ຮັບການຮັບຮອງໃນວັນທີ 01 ເມສາ 2024.

ສື່ມວນຊົນທ້ອງຖິ່ນລາຍງານວ່າ ຮ່າງກົດໝາຍດັ່ງກ່າວ ສະເໜີໂດຍສະມາຊິກລັດຖະສະພາ ອາເໝັດ ອັບດຸນລາ (Ahmed Abdulla) ຜູ້ຕາງໜ້າຂອງພັກປະຊາທິປະໄຕມານດີບ ເຊິ່ງມີສຽງສ່ວນໃຫຍ່ໃນລັດຖະສະພາ.

ຫ້ອງວ່າການສຳນັກງານປະທານາທິບໍດີກ່າວວ່າ ກົດໝາຍສະບັບໃໝ່ນີ້ ບັງຄັບໃຊ້ກັບສະມາຊິກລັດຖະສະພາ, ສະມາຊິກສະພາເກາະ (atoll and island councilors) ແລະ ສະມາຊິກຄະນະກຳມາທິການພັດທະນາແມ່ຍິງ (Women's Development Committees-WDCs).

ຖະແຫຼງການລະບຸວ່າ ທຸກຄົນທີ່ຢູ່ໃນໝວດທີ່ກ່າວມາຂ້າງເທິງ ຈະຕ້ອງລາອອກຈາກຕຳແໜ່ງທາງການເມືອງ ຖ້າຫາກພວກເຂົາປ່ຽນພັກການເມືອງ.

ພາຍໃຕ້ຮ່າງກົດໝາຍຕໍ່ຕ້ານການຫຼົບໜີ, ສະມາຊິກສະພາ ແລະ ສະມາຊິກ WDCs ຈະສູນເສຍທີ່ນັ່ງ ຖ້າພວກເຂົາລາອອກຈາກພັກທີ່ໄດ້ຮັບເລືອກຕັ້ງ ຫຼືປ່ຽນພັກການເມືອງ.

**ແຫຼ່ງຂ່າວ: ຊິນຮວາ**

# ໄຊມອນ ແຮຣ໌ຣິດ ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີອາຍຸນ້ອຍທີ່ສຸດຂອງອຽກລັງ



**ທ່ານ ໄມເຄີນ ດີ. ຮິກກິນສ໌ ຈັບມືກັບທ່ານ ໄຊມອນ ແຮຣ໌ຣິສ ຫຼັງຈາກສຳເລັດພິທີການແຕ່ງຕັ້ງນາຍົກລັດຖະມົນຕີຢ່າງເປັນທາງການ**

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງດູແບລງ, ປະເທດອຽກລັງ ໃນວັນທີ 10 ເມສາ 2024 ວ່າ: ທ່ານ ໄຊມອນ ແຮຣ໌ຣິສ (Simon Harris) ອາຍຸ 37 ປີ ຂຶ້ນເປັນນາຍົກລັດຖະມົນຕີຂອງອຽກລັງ ແທນທ່ານ ລີໂອ ວາແຣດກາຣ໌ (Leo Varadkar) ທີ່ລາອອກຈາກຕຳແໜ່ງຢ່າງກະທັນຫັນເມື່ອເດືອນມີນາຜ່ານມາ ດ້ວຍເຫດຜົນສ່ວນຕົວ ແລະເຫດຜົນທາງການເມືອງ.

ສະພາແຫ່ງຊາດ (ສະພາຕ່ຳ) ໄດ້ລົງຄະແນນສຽງ 88 ຕໍ່ 69 (ສະພາແຫ່ງຊາດອຽກລັງ ມີສະມາຊິກທັງໝົດ 160 ທ່ານ) ເຫັນດີໃຫ້ທ່ານ ແຮຣ໌ຣິສ ດຳລົງຕຳແໜ່ງນາຍົກລັດຖະມົນຕີ ເຊິ່ງໃນເວລາຕໍ່ມາ ໄດ້ຖືກແຕ່ງຕັ້ງຢ່າງເປັນທາງການໂດຍປະທານາທິບໍດີ ໄມເຄີນ ດີ. ຮິກກິນສ໌ (Michael D. Higgins).

ເຖິງແມ່ນວ່າພັກ Fine Gael ເຊິ່ງເປັນສ່ວນໜຶ່ງຂອງລັດຖະບານປະສົມສາມຝ່າຍຂອງອຽກລັງ ເລືອກທ່ານ ແຮຣ໌ຣິສເປັນຫົວໜ້າພັກຫຼັງຈາກທ່ານ ວາແຣດກາຣ໌ ລາອອກ, ແຕ່ທ່ານ ແຮຣ໌ຣິສ ຕ້ອງປະເຊີນກັບການເລືອກຕັ້ງຄັ້ງສຳຄັນໃນອີກສອງສາມເດືອນຂ້າງໜ້າ ລວມທັງແຮງກົດດັນພາຍໃນປະເທດ ໃນການຮັບມືກັບວິກິດການທີ່ຢູ່ອາໄສ ແລະ ການຕໍ່ຕ້ານການອົບພະຍົບ.

ທ່ານ ແຮຣ໌ຣິສ ກ່າວຕໍ່ກອງປະຊຸມສະພາແຫ່ງຊາດ "ນີ້ແມ່ນລັດຖະບານທີ່ເຕັມໄປດ້ວຍການຮ່ວມມື ແລະ ຂ້າພະເຈົ້າຕັ້ງໃຈທີ່ຈະນຳພາພວກເຮົາດ້ວຍຈິດໃຈແຫ່ງຄວາມສາມັກຄີ, ການຮ່ວມມື ແລະ ການເຄົາລົບເຊິ່ງກັນແລະກັນ; ຂ້າພະເຈົ້າຕ້ອງການທີ່ຈະນຳເອົາແນວຄິດໃໝ່, ພະລັງງານໃໝ່ ແລະ ຄວາມເຫັນອົກເຫັນໃຈໃໝ່ ມາສູ່ຊີວິດມວນຊົນ ເຊິ່ງແນ່ນອນວ່າເວລານັ້ນສັ້ນຫຼາຍ ແລະ ຍັງມີອີກຫຼາຍຢ່າງທີ່ຕ້ອງເຮັດ."

ທັງນີ້ ການດຳລົງຕຳແໜ່ງນາຍົກລັດຖະມົນຕີຂອງທ່ານ ແຮຣ໌ຣິສ ຖືເປັນການກ້າວຂຶ້ນທາງການເມືອງຢ່າງວ່ອງໄວ ເຊິ່ງນັກວິຈານຫຼາຍຄົນຍອມຮັບວ່າ ທ່ານເປັນນັກສື່ສານທີ່ມີພອນສະຫວັນ; ຍິ່ງໄປກວ່ານັ້ນ, ຊື່ສຽງຂອງທ່ານ ແຮຣ໌ຣິສຢູ່ໃນສື່ສັງຄົມອອນລາຍ ໂດຍສະເພາະ ຕິກຕ໊ອກ ຍັງເຮັດໃຫ້ທ່ານກາຍເປັນນັກການເມືອງທີ່ໂດດເດັ່ນຫຼາຍທີ່ສຸດຄົນໜຶ່ງຂອງອຽກລັງ.

**ແຫຼ່ງຂ່າວ: ຊິນຮວາ**

# ຜູ້ນຳ ສ.ເກົາຫຼີ ໃຫ້ຄຳໝັ້ນຈະປະຕິຮູບວຽກງານຂອງລັດ ຫຼັງຈາກພ່າຍແພ້ການເລືອກຕັ້ງ ສສຊ




*ຜູ້ນຳສ.ເກົາຫຼີຍອມຮັບຄວາມປະລາໄຊໃນບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ, ແຕ່ຢືນຢັນສືບຕໍ່ບໍລິຫານປະເທດດ້ວຍການເປັນລັດຖະບານສຽງສ່ວນໜ້ອຍ.*

ເວັບໄຊສຳນັກຂ່າວຢອນຮັບ (Yonhap News Agency) ລາຍງານເມື່ອວັນທີ 11 ເມສາ 2024 ວ່າ: ທ່ານ ຢຸນ ຊອກຢອນ (Yoon Suk Yeol) ປະທານາທິບໍດີຂອງສາທາລະນະລັດເກົາຫຼີ ກ່າວເຖິງຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ເຊິ່ງພັນທະມິດລັດຖະບານເປັນຝ່າຍປະລາໄຊໃຫ້ກັບຝ່າຍຄ້ານວ່າລັດຖະບານເຄົາລົບການຕັດສິນໃຈຂອງປະຊາຊົນ ແລະ ຢືນຢັນຈະສືບຕໍ່ນະໂຍບາຍປະຕິຮູບຕາມທີ່ໃຫ້ຄຳໝັ້ນສັນຍາໄວ້ ເພື່ອຂັບເຄື່ອນເສດຖະກິດໃຫ້ມີສະຖຽນລະພາບ ແລະ ຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນ.

ໃນເວລາດຽວກັນ ມີລາຍງານວ່າ ທ່ານ ຮັນ ດ໊ັກ-ຊູ (Han Duck-soo) ນາຍົກລັດຖະມົນຕີ ແລະ ເຈົ້າໜ້າທີ່ລະດັບສູງອີກຢ່າງໜ້ອຍ 3 ທ່ານໃນລັດຖະບານ ຍື່ນໃບລາອອກຕໍ່ຜູ້ນຳ ສ.ເກົາຫຼີເພື່ອສະແດງຄວາມຮັບຜິດຊອບຕໍ່ຜົນການເລືອກຕັ້ງຄັ້ງນີ້.

ການເລືອກຕັ້ງ ສສຊ 300 ທີ່ນັ່ງ ເຊິ່ງຈັດຂຶ້ນທຸກ 4 ປີ ໃນວັນພຸດທີ 10 ເມສາຜ່ານມາທີ່ໜ່ວຍເລືອກຕັ້ງ 14.259 ແຫ່ງໃນທົ່ວປະເທດ ເພື່ອໃຫ້ຜູ້ມີສິດລົງຄະແນນສຽງເລືອກຕັ້ງເອົາ 254 ທີ່ນັ່ງແບບແບ່ງເຂດ ແລະ 46 ທີ່ນັ່ງແບບຜູ້ແທນສັດສ່ວນ (proportional representation) ຫຼື ແບບບັນຊີລາຍຊື່; ການເລືອກຕັ້ງຄັ້ງນີ້ ມີຜູ້ມາໃຊ້ສິດ ຢູ່ທີ່ 66,98 ສ່ວນຮ້ອຍ ຫຼື 29.662.313 ຄົນ ໃນຈຳນວນຜູ້ມີສິດເລືອກຕັ້ງ 44.280.011 ຄົນ.

ພັກພະລັງປະຊາຊົນ ເຊິ່ງເປັນພັກແກນນຳລັດຖະບານ ໄດ້ຮັບການເລືອກຕັ້ງແບບແບ່ງເຂດພຽງ 90 ທີ່ນັ່ງ ແລະ 18 ທີ່ນັ່ງແບບບັນຊີລາຍຊື່, ລວມເປັນ 108 ທີ່ນັ່ງ; ຂະນະທີ່ພັກປະຊາທິປະໄຕ ຂອງທ່ານ ລີ ແຈ-ມະຍອງ (Lee Jae-myung) ຜູ້ນຳຝ່າຍຄ້ານ ໄດ້ຮັບການເລືອກຕັ້ງແບບແບ່ງເຂດ 161 ທີ່ນັ່ງ ແລະ 14 ທີ່ນັ່ງ ແບບບັນຊີລາຍຊື່, ລວມເປັນ 175 ທີ່ນັ່ງ. ເມື່ອລວມສຽງກັບພັນທະມິດ, ພັກຮ່ວມລັດຖະບານ ຈະມີ 111 ທີ່ນັ່ງ, ສ່ວນພັກຮ່ວມຝ່າຍຄ້ານ ມີ 189 ທີ່ນັ່ງ ຫຼາຍກວ່າ 2 ສ່ວນ 3.

ຜົນການເລືອກຕັ້ງທີ່ອອກມາ ຍິ່ງສ້າງຄວາມຫຍຸ້ງຍາກໃນການເຮັດວຽກຂອງລັດຖະບານຕື່ມອີກ ເຊິ່ງຈະຍັງເປັນສຽງສ່ວນໜ້ອຍ ຕະຫຼອດວາລະທີ່ເຫຼືອອີກສາມປີ ແລະ ຄະແນນນິຍົມຂອງທ່ານ ຢຸນ ຢູ່ໃນລະດັບຕ່ຳ ນັບແຕ່ໄດ້ຮັບໄຊຊະນະໃນການເລືອກຕັ້ງ ແລະ ເຂົ້າຮັບຕຳແໜ່ງເມື່ອປີ 2022 ເຊິ່ງເປັນການເອົາຊະນະທ່ານ ລີ ພຽງ 0,73%.

ທັງນີ້, ປັດໄຈຕົ້ນຕໍໃນການຕັດສິນໃຈລົງຄະແນນສຽງຂອງປະຊາຊົນແມ່ນບັນຫາພາຍໃນປະເທດ ບໍ່ວ່າຈະເປັນເລື່ອງສະຫວັດດີການສັງຄົມ, ຊີວິດການເປັນຢູ່ ແລະ ການສໍ້ລາດບັງຫຼວງ.

ປະທານາທິບໍດີ ສ.ເກົາຫຼີ ມີວາລະດຳລົງຕຳແໜ່ງພຽງສະໄໝດຽວ ແລະ ທ່ານ ຢຸນ ຊອກຢອນ ຈະຄົບວາລະການດຳລົງຕຳແໜ່ງໃນປີ 2027.

# ເລີ່ມຕົ້ນລົງຄະແນນສຽງເລືອກຕັ້ງ ສະມາຊິກລັດຖະສະພາມານດີບ




ການລົງຄະແນນສຽງເລືອກຕັ້ງສະມາຊິກລັດຖະສະພາຂອງມານດີບ ໄດ້ເລີ່ມຂຶ້ນໃນຕອນເຊົ້າຂອງວັນອາທິດທີ 21 ເມສາຜ່ານມາ ຫຼັງຈາກໄດ້ເປີດໜ່ວຍປ່ອນບັດໃນທົ່ວປະເທດ ແລະ ຢູ່ຕ່າງປະເທດ.

ຜູ້ສະໝັກຮັບເລືອກຕັ້ງທັງໝົດ 368 ທ່ານ ພວມແຂ່ງຂັນເອົາ 93 ທີ່ນັ່ງໃນລັດຖະສະພາ, ໂດຍມີຜູ້ສະໝັກເລືອກຕັ້ງ 42 ທ່ານ ເປັນຕົວແທນເພດຍິງ; ຜູ້ມີສິດເລືອກຕັ້ງຄັ້ງນີ້ ມີ 284.663 ຄົນ.

ປະເທດໃນອາຊີໃຕ້ ໄດ້ຈັດຕັ້ງໜ່ວຍປ່ອນບັດ 602 ແຫ່ງທົ່ວປະເທດ, ໃນຂະນະທີ່ມີ 3 ແຫ່ງຕັ້ງຢູ່ຕ່າງ ປະເທດ ຄື: ນະຄອນຫຼວງໂກລົມໂບ ຂອງສີລັງກາ, ເມືອງຕຣິວັນດຣຳ (Trivandrum) ຂອງອິນເດຍ ແລະນະຄອນຫຼວງກົວລາລຳເປີຂອງມາເລເຊຍ.

ການປ່ອນບັດໄດ້ເປີດໃນເວລາ 08:00 ໂມງເຊົ້າ ແລະ ປິດລົງໃນເວລາ 17:30 ໂມງ ຕາມເວລາທ້ອງຖິ່ນໃນປະເທດ.

**ແຫຼ່ງຂ່າວ: ຊິນຮວາ**

# ອະດີດນາຍົກລັດຖະມົນຕີ ໄດ້ຮັບເລືອກຕັ້ງ ເປັນປະທານສະພາສູງຂອງປາກິດສະຖານ


ທ່ານ ຢູຊຸບ ຣາຊາ ກິລານີ
ທ່ານ ໄຊດັນ ຄານ ນາຊີຣ໌

ວັນອັງຄານທີ09ເມສາ ຜ່ານມາ, ທ່ານ ຢູຊຸບ ຣາຊາ ກິລານີ (Yousuf Raza Gilani) ອະດີດນາຍົກລັດຖະມົນຕີປາກິດສະຖານ ໄດ້ຮັບເລືອກຕັ້ງໃຫ້ເປັນປະທານວຸດທິສະພາ ຫຼື ສະພາສູງຂອງລັດຖະສະພາຂອງປະເທດ, ຕາມການປະກາດຂອງທ່ານ ອີຊັກ ດາຣ໌ (Ishaq Dar) ປະທານເຈົ້າໜ້າທີ່ການເລືອກຕັ້ງສະມາຊິກສະພາສູງ; ທ່ານ ດາຣ໌ ເຊິ່ງເປັນລັດຖະມົນຕີກະຊວງການຕ່າງປະເທດ ໄດ້ປະກາດວ່າ: ທ່ານ ກິລານີ ໄດ້ຮັບເລືອກຕັ້ງໂດຍບໍ່ມີຝ່າຍຄ້ານ ຫຼັງຈາກທີ່ບໍ່ມີຜູ້ໃດຍື່ນໃບສະໝັກເຂົ້າແຂ່ງຂັນເລືອກຕັ້ງ.

ທ່ານ ກິລານີ ອາຍຸ 71 ປີ ເຊິ່ງເປັນສະມາຊິກລັດຖະສະພາຂອງພັກປະຊາຊົນປາກິດສະຖານເຄີຍດຳລົງຕຳແໜ່ງນາຍົກລັດຖະມົນຕີ ແຕ່ປີ 2008 ຫາ 2012.

ທ່ານ ໄຊດັນ ຄານ ນາຊີຣ໌ (Syedal Khan Nasir) ຈາກພັກສັນນິບາດມຸດສະລິມປາກິດສະຖານ-ນາວາດ ຫຼື PML-N (Pakistan Muslim League-Nawaz) ພັກລັດຖະບານປັດຈຸບັນກໍໄດ້ຮັບເລືອກຕັ້ງເປັນຮອງປະທານສະພາສູງໂດຍບໍ່ມີໃຜຄັດຄ້ານ.

ເມື່ອຕົ້ນເດືອນນີ້, ປະທານາທິບໍດີປາກິດສະຖານ ທ່ານ ອາຊິບ ອາລີ ຊາຣ໌ດາຣີ (Asif Ali Zardari) ໄດ້ຮຽກໂຮມກອງປະຊຸມຄັ້ງປະຖົມມະລຶກໃນວັນອັງຄານ 09 ເມສາ ຫຼັງຈາກການເລືອກຕັ້ງເມື່ອວັນທີ 02 ເມສາ 2024 ເພື່ອສາບານຕົນເຂົ້າຮັບຕຳແໜ່ງສະມາຊິກໃໝ່ ແລະ ເລືອກຕັ້ງປະທານ ແລະ ຮອງປະທານສະພາສູງ.

**ແຫຼ່ງຂ່າວ: ຊິນຮວາ**

# ບຸນກາລີ ຈະຈັດການເລືອກຕັ້ງສະພາແຫ່ງຊາດ, ລັດຖະສະພາເອີຣົບ ໃນວັນທີ 9 ມິຖຸນານີ້




ອີງຕາມລັດຖະດຳລັດທີ່ໄດ້ລົງນາມໂດຍປະທານາທິບໍດີ ຣູເມນ ຣາເດຟ (Rumen Radev) ໃນຕອນເຊົ້າວັນອັງຄານທີ 09 ເມສາ 2024, ບຸນກາລີ ຈະຈັດການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ລັດຖະສະພາເອີຣົບ ໃນວັນທີ 09 ມິຖຸນານີ້.

ໃນຂະນະດຽວກັນ, ປະທານາທິບໍດີຣາເດຟ ໄດ້ແຕ່ງຕັ້ງລັດຖະບານຮັກສາການທີ່ນຳໂດຍທ່ານ ດີມີທາຣ໌ ກລາຟເຊຟ (Dimitar Glavchev) ຈົນເຖິງວັນທີ 09 ເດືອນມິຖຸນາ 2024; ທ່ານ ກລາຟເຊຟ ອາຍຸ 60 ປີ ປັດຈຸບັນເປັນປະທານອົງການກວດສອບແຫ່ງຊາດບຸນກາລີ, ໃນປີ 2017 ທ່ານເຄີຍດຳລົງຕຳແໜ່ງປະທານສະພາແຫ່ງຊາດ ໄລຍະ 7 ເດືອນ.

ການເລືອກຕັ້ງສະມາຊິກລັດຖະສະພາເອີຣົບ ຈະຈັດຂຶ້ນຢູ່ປະເທດຕ່າງໆຂອງສະຫະພາບເອີຣົບ ແຕ່ວັນທີ 6-9 ມິຖຸນານີ້ ເຊິ່ງ ບຸນກາລີ ຈະເລືອກເອົາ 17 ທີ່ນັ່ງ.

ການເລືອກຕັ້ງ ສສຊ ແລະ ການສ້າງຕັ້ງລັດຖະບານຮັກສາການ ໄດ້ກາຍເປັນການບັງຄັບ ຫຼັງຈາກບັນດາພັກການເມືອງທີ່ມີທີ່ນັ່ງໃນສະພາແຫ່ງຊາດ ບໍ່ສາມາດເລືອກຕັ້ງຄະນະລັດຖະມົນຕີຊຸດປົກກະຕິ ພາຍຫຼັງນາຍົກລັດຖະມົນຕີລາອອກຈາກຕຳແໜ່ງໃນວັນທີ 05 ມີນາຜ່ານມາ.

ການເລືອກຕັ້ງ ສສຊ ຄັ້ງຜ່ານມາ ໄດ້ຈັດຂຶ້ນເມື່ອເດືອນເມສາ 2023.

**ແຫຼ່ງຂ່າວ: ຊິນຮວາ**

# ພັກລັດຖະບານກຣົວຊີ ຊະນະເລືອກຕັ້ງລັດຖະສະພາ



ການເລືອກຕັ້ງສະມາຊິກລັດຖະສະພາກຣົວຊີ ໄດ້ເລີ່ມຂຶ້ນໃນຕອນເຊົ້າວັນພຸດທີ 17 ເມສາ 2024 ໂດຍມີຜູ້ສະໝັກ 2.302 ທ່ານ ຈາກ 59 ພັກການເມືອງ ແລະ ຜູ້ສະໝັກເອກະລາດ ແຂ່ງຂັນກັນເພື່ອຍາດເອົາ 151 ທີ່ນັ່ງ.

ອີງຕາມຂໍ້ມູນຂອງຄະນະກຳມະການການເລືອກຕັ້ງແຫ່ງລັດ (State Election Commission-SEC), ຜູ້ມີສິດລົງຄະແນນສຽງທີ່ລົງທະບຽນ ຫຼາຍກວ່າ 3,73 ລ້ານຄົນ ທັງຢູ່ພາຍໃນ ແລະ ຕ່າງປະເທດ.

ຜົນການເລືອກຕັ້ງເບື້ອງຕົ້ນ ຫຼັງຈາກນັບຄະແນນສຽງແລ້ວຫຼາຍກວ່າ 90 ສ່ວນຮ້ອຍ ທີ່ຖືກປະກາດໂດຍ SEC ໃນຕອນເຊົ້າວັນພະຫັດທີ 18 ເມສາ ປາກົດວ່າ: ພັກສະຫະພັນປະຊາທິປະໄຕກຣົວຊີ (Croatian Democratic Union) ເຊິ່ງນຳໂດຍທ່ານນາຍົກລັດຖະມົນຕີ ອັນເດຣດ ເປລນໂຄວິດ (Andrej Plenkovic) ໄດ້ຮັບໄຊຊະນະຫຼາຍທີ່ສຸດ 60 ທີ່ນັ່ງ, ແຕ່ບໍ່ພຽງພໍເພື່ອສ້າງຕັ້ງລັດຖະບານພັກດຽວທີ່ຕ້ອງການ 76 ທີ່ນັ່ງ; ຕາມຫຼັງມາແມ່ນບັນດາພັກພັນທະມິດທີ່ນຳໂດຍພັກປະຊາທິປະໄຕສັງຄົມກຣົວຊີ (Croatian Social Democratic) ໄດ້ 42 ທີ່ນັ່ງ, ຕິດຕາມດ້ວຍຂະບວນການມາຕຸພູມ (Homeland Movement) ໄດ້ 14 ທີ່ນັ່ງ; ໃນຂະນະທີ່ພັກຂົວ (The Bridge) ແລະ ພັກພວກເຮົາເຮັດໄດ້ (We Can!) ແມ່ນຢູ່ໃນອັນດັບທີ 4 ແລະ 5 ດ້ວຍຈຳນວນ 11 ແລະ 10 ທີ່ນັ່ງ ຕາມລຳດັບ.

ລັດຖະສະພາກຣົວຊີ ເປັນລະບົບສະພາດຽວ (unicameral) ມີ 151 ທີ່ນັ່ງ ແລະ ມີອາຍຸການ 4 ປີ; ລັດ ຖະສະພາຊຸດຜ່ານມາ ໄດ້ເລີ່ມໃນເດືອນກໍລະກົດ 2020 ແລະ ຖືກຍຸບລົງເມື່ອເດືອນມີນາ 2024.

**ແຫຼ່ງຂ່າວ: ຊິນຮວາ**

# ນາຍົກລັດຖະມົນຕີໝູ່ເກາະຊາໂລມົງ ໄດ້ຮັບເລືອກຕັ້ງເຂົ້າສູ່ສະພາແຫ່ງຊາດອີກຄັ້ງ




ສະຖານີໂທລະພາບແຫ່ງຊາດ SIBC ລາຍງານໃນວັນສຸກທີ 19 ເມສາ 2024 ວ່າ: ທ່ານ ມານາສເຊ ໂຊກາວາເຣ (Manasseh Sogavare) ນາຍົກລັດຖະມົນຕີໝູ່ເກາະຊາໂລມົງ (Solomon Islands) ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ອີກຄັ້ງໜຶ່ງ.

ເຈົ້າໜ້າທີ່ທີ່ກັບຄືນມາຈາກທ້ອງຖິ່ນປະກາດຊົ່ວຄາວວ່າ ທ່ານ ໂຊກາວາເຣ ເປັນຜູ້ຊະນະເຊິ່ງໄດ້ຮັບຄະແນນສຽງສ່ວນຫຼາຍໃນການແຂ່ງຂັນເອົາທີ່ນັ່ງໃນສະພາແຫ່ງຊາດກັບຜູ້ສະໝັກອີກ 4 ທ່ານ ຢູ່ເຂດເລືອກຕັ້ງຊອຍໂຊນຕາ ເວັນອອກ (East Choiseul).

ການໄດ້ຮັບເລືອກຕັ້ງຄືນໃໝ່ຂອງທ່ານ ໂຊກາວາເຣ, ໝາຍຄວາມວ່າທ່ານຈະສືບຕໍ່ເປັນ ສສຊ ທີ່ຍາວນານທີ່ສຸດໂດຍດຳລົງຕຳແໜ່ງເປັນເວລາ 27 ປີ, ການເດີນທາງທາງການເມືອງຂອງທ່ານເລີ່ມຂຶ້ນໃນປີ 1997 ເມື່ອໄດ້ຮັບໄຊຊະນະຢູ່ເຂດເລືອກຕັ້ງຊອຍໂຊນຕາເວັນອອກ ໃນລະຫວ່າງການເລືອກຕັ້ງທົ່ວໄປແຫ່ງຊາດ.

ທ່ານ ໂຊກາວາເຣ ຜູ້ນຳພັກຄວາມເປັນເຈົ້າຂອງ, ຄວາມສາມັກຄີ ແລະ ຄວາມຮັບຜິດຊອບ (ຫຼືພັກຂອງພວກເຮົາ) [Ownership, Unity and Responsibility Party (or Our Party)] ພະຍາຍາມທີ່ຈະກາຍເປັນຄົນທຳອິດທີ່ໄດ້ຮັບເລືອກເປັນນາຍົກລັດຖະມົນຕີຄືນໃໝ່ຫຼັງຈາກດຳລົງຕຳແໜ່ງເຕັມວາລະນັບແຕ່ປີ2019ເປັນຕົ້ນມາ, ກ່ອນໜ້ານີ້ທ່ານເຄີຍດຳລົງຕຳແໜ່ງນີ້ 3 ຄັ້ງຄື: ປີ 2000-2001, 2006-2007 ແລະ 2014-2017.

ໃນການກະກຽມໃຫ້ແກ່ການເລືອກຕັ້ງ, ໄດ້ມີການພິມບັດລົງຄະແນນ 1 ລ້ານກວ່າໃບ ເພື່ອຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງທີ່ລົງທະບຽນໄວ້420.253 ຄົນ ໄດ້ມີໂອກາດໃຊ້ສິດອອກສຽງຂອງພວກເຂົາ.

ຜູ້ສະໝັກຮັບເລືອກຕັ້ງທັງໝົດ334ທ່ານແຂ່ງຂັນເອົາ 50 ທີ່ນັ່ງໃນການເລືອກຕັ້ງສະພາແຫ່ງຊາດ, ຜູ້ສະໝັກທີ່ສັງກັດພັກການເມືອງ (13 ພັກ) ມີຈຳນວນຫຼາຍກວ່າຜູ້ສະໝັກເອກະລາດ 219 ຕໍ່ 115 ທ່ານ; ໃນຂະນະດຽວກັນ, ຜູ້ສະໝັກ816 ທ່ານ ແຂ່ງຂັນເອົາທີ່ນັ່ງໃນສະພາແຂວງ ແລະ ຜູ້ສະໝັກ 89 ທ່ານ ແຂ່ງຂັນເອົາທີ່ນັ່ງສຳລັບສະພານະຄອນຫຼວງໂຮເນຍຣາ (Honiara).

ຫຼັງຈາກການລົງຄະແນນສຽງສຳເລັດໃນວັນພຸດທີ 17 ເມສາຜ່ານມາ, ຂະບວນການນັບຄະແນນສຽງສຳລັບການເລືອກຕັ້ງຮ່ວມຂອງໝູ່ເກາະຊາໂລມົງ ຍັງດຳເນີນການຢູ່1.106ໜ່ວຍປ່ອນບັດທີ່ກະຈາຍໄປທົ່ວເກາະ ເຊິ່ງກວມເອົາການເລືອກຕັ້ງແຫ່ງຊາດ ແລະ ຂັ້ນແຂວງ.

ຕາມກົດໝາຍແລ້ວ, ລັດຖະບານລະດັບຊາດ ແລະ ຂັ້ນແຂວງ ຈະໄດ້ຮັບການຈັດຕັ້ງພາຍໃນ 14 ວັນຕໍ່ໜ້າ ຕາມລຳດັບ ໂດຍສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາຂັ້ນແຂວງ, ເຊິ່ງພວກເຂົາຈະດຳລົງຕຳແໜ່ງເປັນເວລາສີ່ປີ.

**ແຫຼ່ງຂ່າວ: ຊິນຮວາ**

# ມາດຕະການເພື່ອຢຸດຕິ ອາຊະຍາກຳຕົ້ມຕຸ໋ນ

ວິເສດ ສະແຫວງສຶກສາ

ເນື້ອໃນທີ່ຢາກມາບົບແບ່ງກັບບັນດາທ່ານຜູ້ອ່ານປະຈຳສະບັບນີ້ ພົວພັນກັບມາດຕະການ ຂອງທາງການຈີນ ໃນການແກ້ໄຂ ອາຊະຍາກຳ ຕົ້ມຕຸ໋ນ ທີ່ພົນລະເມືອງຈີນ ກໍ່ຂຶ້ນທັງຢູ່ພາຍໃນ ແລະຢູ່ຕ່າງປະເທດ ແລະເລື່ອງການປ້ອງກັນໄພສໍ້ລາດບັງຫຼວງຂອງເຫຼົ່າພະນັກງານທີ່ເຮັດວຽກຢູ່ໃນລະບົບທະນາຄານ.

ໃນປັດຈຸບັນ ບັນຫາ ອາຊະຍາກຳທີ່ແຜ່ຫຼາຍ ແລະ ເກີດຂຶ້ນອ່າວຖີ່ໃນລະດັບປະເທດ ພາກພື້ນ ແລະ ໃນທົ່ວໂລກນັ້ນ ກໍຄືອາຊະຍາກຳຕົ້ມຕຸ໋ນດ້ວຍກົນອຸບາຍລາຍຫຼ່ຽມ ຮ້ອຍແປດພັນປະການ ແລະ ເມື່ອເວົ້າຮອດອາຊະຍາກຳຕົ້ມຕຸ໋ນທາງອອນລາຍ ຫຼາຍຄົນກໍມັກຈະງວາກໄປຫາຈີນ ເພາະມັກຈະມີຂ່າວກ່ຽວກັບຄົນຈີນແຕກປອກຈຳນວນໜຶ່ງໄດ້ຊອກຫາກິນດ້ວຍການສໍ້ໂກງຕົ້ມຕົວະ, ພວກນີ້ສ່ວນໃຫຍ່ອອກໄປເຄື່ອນໄຫວຢູ່ຕ່າງປະເທດບ່ອນທີ່ພວກເຂົາສາມາດສວຍໂອກາດ ຍ້ອນການປະຕິບັດກົດໝາຍໃນປະເທດເຫຼົ່ານັ້ນຍັງອ່ອນແອ-ຍັງມີໄພສໍ້ລາດບັງຫຼວງ. ທີ່ຫຼາຍຄັ້ງ ມັກຈະນຶກເຖິງຄົນຈີນໃນຄະດີຕົ້ມຕຸ໋ນ ກໍເພາະວ່າທາງການຈີນເອົາຈິງເອົາຈັງໃນການປາບປາມພວກມິດສາຊີບ, ເມື່ອປາບປາມຫຼາຍຂ່າວເລື່ອງຄະດີກໍມີຫຼາຍແນ່ນອນ. ທາງການຈີນຖືວ່າຄົນຈີນ ທີ່ເປັນນັກຕົ້ມຕຸ໋ນເຫຼົ່ານີ້ ເປັນໄພອັນຕະລາຍຕໍ່ປະເທດຊາດແລະທັງເຮັດໃຫ້ເສື່ອມເສຍກຽດສັກສີຂອງຈີນເອງດ້ວຍ. ເພື່ອແກ້ໄຂບັນຫານີ້, ຈີນບໍ່ໄດ້ເຄື່ອນໄຫວແບບໂດດດ່ຽວ ດຽວດາຍ ແຕ່ມີການຮ່ວມມືກັບຫຼາຍປະເທດທົ່ວໂລກ, ໜຶ່ງໃນນັ້ນກໍຄືກົນໄກການຮ່ວມມືເຂດລຸ່ມແມ່ນ້ຳຂອງ ອັນມີຈີນເອງ, ມຽນມາ, ລາວ, ຫວຽດນາມ, ໄທ ແລະ ກຳປູເຈຍ. ແລ້ວຫວ່າງມໍ່ໆມານີ້ກໍມີຂ່າວກ່ຽວກັບຜົນງານການເຄື່ອນໄຫວຂອງທາງການຈີນ ເພື່ອປາບປາມບັນດານັກຕົ້ມຕຸ໋ນ ແຕ່ວັນທີ 25 ມິຖຸນາ ເຖິງ ວັນທີ 30 ກັນຍາ 2023 (ປະມານ 3 ເດືອນປາຍ) ໂດຍສາມາດຈັບກຸມພວກກະທຳຜິດໄດ້ທັງໝົດ 17.000 ຄົນ. ຂ່າວນີ້ຖືກເປີດເຜີຍຢູ່ກອງປະຊຸມ ຂ່າວໃນວັນທີ 10 ຕຸລາ 2023 ໂດຍຫ້ອງການສອບສວນຄະດີອາຊະຍາກຳຂອງກະຊວງປ້ອງກັນຄວາມສະຫງົບຈີນ.

ການເຄື່ອນໄຫວເພື່ອຕັດຮາກຖອນເຫງົ້າກຸ່ມແກ້ງອາຊະຍາກຳຕົ້ມຕຸ໋ນທາງອອນລາຍຄັ້ງນີ້ ເລັ່ງເປົ້າໃສ່ຄົນຈີນທີ່ໄປຕັ້ງເຄືອຂ່າຍຕົ້ມຕຸ໋ນຢູ່ພາກເໜືອຂອງປະເທດມຽນມາ. ພວກອາຊະຍາກອນເຫຼົ່ານີ້ນຳໃຊ້ກົນອຸບາຍລາຍຫຼ່ຽມ ແລະເຄື່ອງມືສື່ສານ ອັນທັນສະໄໝເພື່ອຕົ້ມຕຸ໋ນສໍ້ໂກງເອົາເງິນນຳບັນດາເຫຍື່ອຢູ່ພາຍໃນປະເທດຈີນ. ຂ່າວບອກວ່າ ການປະຕິບັດງານປາບປາມຄັ້ງນີ້ ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງບັນດາໜ່ວຍງານ ປ້ອງກັນຄວາມສະຫງົບ ຂອງແຂວງ ຢູນນານ ໂດຍມີການປະສານສົມທົບແໜ້ນກັບບັນດາໜ່ວຍງານປະຕິບັດກົດໝາຍຂອງມຽນມາ. ເວົ້າສະເພາະພວກກະທຳຜິດ ທີ່ທາງການມຽນມາໄດ້ຈັບສົ່ງໃຫ້ທາງການຈີນນັ້ນ ມີທັງໝົດ 2.317 ຄົນ ແລະ ເມື່ອບວກກັບສະມາຊິກເຄືອຂ່າຍທັງໝົດທີ່ຖືກຈັບໄດ້ ຈຳນວນເພີ່ມຂຶ້ນເຖິງ 17.000 ຄົນ. ຂ່າວປິດທ້າຍສຳລັບບົດນີ້ແມ່ນເລື່ອງກ່ຽວກັບມາດຕະການຂອງທາງການຈີນ ເພື່ອເພີ່ມທະວີການປ້ອງກັນ ໄພສໍ້ລາດບັງຫຼວງ ທີ່ເກີດຂຶ້ນຢູ່ພາຍໃນຂະແໜງການ ການເງິນ ແລະ ທະນາຄານ. ທີ່ຕ້ອງແຍກເອົາໃຈໃສ່ເປັນພິເສດ, ກໍເພາະວ່າພະນັກງານໃນກົງຈັກຂອງຂະແໜງນີ້ນັ້ນ ເຮັດວຽກກັບເງິນ ຖ້າບໍ່ລະມັດລະວັງເປັນພິເສດ ກໍອາດຈະເກີດມີພະຍາດໂລພາຕາຮ້ອນ ແລະ ສວຍໂອກາດ ຂ່າວໃນໜັງສືພິມ ຈາຍນາເດລີ ໃນທ້າຍເດືອນພະຈິກ 2023 ໃຫ້ຮູ້ວ່າ ຜ່ານຂັ້ນເຄື່ອນໄຫວຕິດຕາມ ກວດກາ-ກວດສອບຕົວຈິງ, ທາງຄະນະປະຕິບັດງານ ສາມາດຈັບກຸມ ແລະ ລົງໂທດພະນັກງານການເງິນທັງໝົດເກືອບ 90 ຄົນ ໃນນັ້ນ 8 ຄົນໃນຕຳແໜ່ງຮອງປະທານ ທະນາຄານອຸດສາຫະກຳ ແລະ ການຄ້າຈີນ, ອະດີດເລຂາຫ້ອງການກວດກາວິໄນ ທະນາຄານການຄ້າສາກົນຈີນ ແລະ ອີກ 2 ຄົນເປັນເຖິງຂັ້ນຮອງປະທານທະນາຄານພັດທະນາຈີນ.

ເຫັນບໍ່ລະ? ຈີນເອົາແທ້ ແລະເອົາບ່ອນກົກໆຂອງບັນຫາ ເພາະວ່າຖ້າຄົນໃນທະນາຄານເອງໂກງ ມັນກໍບໍ່ຕ່າງຫຍັງກັບເກີດມີ "ໜອນໃນໄສ້" ນັ້ນແລ !

ທະນາຄານພັດທະນາລາວ
LDB Bank




## ຄຳແນະນຳທີ່ດີ

#ບ່າວກະບື

**ຊາຍ** ໜຸ່ມຄົນໜຶ່ງ ເຂົ້າໄປຮ້ານຕັດຫຍິບເຄື່ອງນຸ່ງ. ເຂົາຕ້ອງການເສື້ອເຊີບໃໝ່. ຊ່າງຕັດຖາມເຂົາ:

" ເຈົ້າແຕ່ງດອງແລ້ວ ຫຼື ຍັງເປັນໂສດ? "

" ແຕ່ງແລ້ວແຕ່ປີກາຍພຸ້ນ, ເປັນຫຍັງຈຶ່ງຖາມຄຳຖາມນີ້ "

" ຖາມກໍເພາະວ່າຜູ້ຊາຍທີ່ມີເມຍ ຈະຕ້ອງມີຖົງເສື້ອລັບນ້ອຍໆ ຢູ່ດ້ານໃນເສື້ອ".

## THE GOOD ADVICE

#BAOKBU

A young man came into the tailor's shop, He wanted to have a new shirt, The tailor asked him.

" Are you married or single? "

" I got married last year, But why do you ask me that question ? "

" Because a married man must have a secret small pocket inside his shirt. "

### ສືບຕໍ່...

(ຕໍ່ຈາກໜ້າ 1)

ຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ, ຮອງລັດຖະມົນຕີກະຊວງຍຸຕິທຳ; ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ; ບັນດາທ່ານຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງ.

ໃນວາລະຂອງກອງປະຊຸມ, ທ່ານ ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີກະຊວງແຜນການແລະການລົງທຶນ ໄດ້ສະເໜີບົດກ່ຽວກັບການປັບປຸງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໂດຍຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດໄລຍະຜ່ານມາ, ເຫດຜົນແລະຄວາມຈຳເປັນໃນການປັບປຸງ, ຂະບວນການຄົ້ນຄວ້າປັບປຸງ, ໂຄງປະກອບ ແລະ ເນື້ອໃນສຳຄັນຂອງຮ່າງກົດໝາຍ ແລະ ອື່ນໆ ເຊິ່ງໃນໄລຍະຜ່ານມາ ເຫັນວ່າຍັງບໍ່ທັນແທດເໝາະກັບສະພາບຕົວຈິງ ແລະ ບໍ່ສອດຄ່ອງກັບເງື່ອນໄຂຂອງການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ; ຍັງມີບາງເນື້ອໃນທີ່ບໍ່ຈະແຈ້ງ, ລະອຽດ, ຮັດກຸມ ແລະ ຄົບຖ້ວນ ເພື່ອຮັບປະກັນຜົນປະໂຫຍດຂອງເຈົ້າຂອງຊັບສິນທາງປັນຍາ ແລະ ປະຊາຊົນລາວບັນດາເຜົ່າ. ຫຼັງຈາກນັ້ນ, ຄະນະຮັບຜິດຊອບປັບປຸງກົດໝາຍ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແລະ ເປັນເອກະພາບກັນຕໍ່ຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ຢ່າງກົງໄປກົງມາ ເຊິ່ງປະກອບມີ XII ພາກ, 28 ໝວດ ແລະ 103 ມາດຕາ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍດັ່ງກ່າວ ຄົບຖ້ວນ ແລະ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ສົນທິສັນຍາ, ສັນຍາສາກົນທີ່ກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດຕົວຈິງ.

**(ນາງ ກຸກກິກ ບຸດດາໄຊ)**

### ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ແນກ ພ້ອມດ້ວຍພະນັກງານພາຍໃນ ສນສ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອເປັນການພັດທະນາຫຼັກສູດ ແນໃສ່ຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງແລະພະນັກງານທີ່ເປັນເສນາທິການຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ເພື່ອເປັນຄູ່ມືໃຫ້ແກ່ວິທະຍາກອນໃນການເປັນນັກເຝິກອົບຮົມໃຫ້ແກ່ສຳມະນາກອນ ຮັບປະກັນການຮຽນ-ການສອນໃຫ້ສອດຄ່ອງກັບສະພາບຄວາມຕ້ອງການຂອງວຽກງານ; ທັງເປັນການກວດແກ້, ຮຽບຮຽງ ແລະ ບັນນາທິການດ້ານເນື້ອໃນ, ສັບສຳນວນຄຳເວົ້າໃຫ້ມີເນື້ອໃນເລິກເຊິ່ງ, ຄົບຖ້ວນແລະສາມາດເຜີຍແຜ່, ຈັດເຝິກອົບຮົມ ຫຼື ສຳມະນາໃນລະດັບຕ່າງໆ.

ເນື້ອໃນທີ່ນຳມາເຝິກອົບຮົມໃນຄັ້ງນີ້ ປະກອບມີ: 1) ຄວາມຮັບຮູ້ກ່ຽວກັບການສ້າງຫຼັກສູດ; 2) ວຽກງານສ້າງຫຼັກສູດຂອງສະຖາບັນຄົ້ນຄວ້າວິທະຍາສາດການປົກຄອງແລະເຝິກອົບຮົມ, ກະຊວງພາຍໃນ; 3) ນຳສະເໜີພາບລວມໃນການສ້າງຫຼັກສູດ. ນອກຈາກນັ້ນ, ຍັງໄດ້ຈັດກິດຈະກຳກຸ່ມ, ສົນທະນາແລກປ່ຽນຄຳຄິດຄຳເຫັນຮ່ວມກັນອີກດ້ວຍ.

ທ່ານ ສິນທະລາ ຫຼ້າສຸກສະໄໝ ມີຄຳເຫັນວ່າ: ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ແລະ ເພື່ອເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດໃນສະເພາະໜ້າແລະຍາວນານ; ການເຝິກອົບຮົມການສ້າງຫຼັກສູດແມ່ນມີຄວາມຈຳເປັນຢ່າງຍິ່ງແນໃສ່ຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະຖາບັນ ແລະ ປຶ້ມຄູ່ມືເຝິກອົບຮົມໃຫ້ແກ່ພະນັກງານສະຖາບັນຄົ້ນຄວ້ານິຕິກຳໃນຄັ້ງນີ້ ຄົ້ນຄວ້ານິຕິກຳຂອງສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນເລື້ອຍໆ. ຜ່ານມາພະນັກງານພາຍໃນສະຖາບັນຄົ້ນຄວ້ານິຕິກຳ ກໍໄດ້ສຳເລັດການເຝິກອົບຮົມການເປັນວິທະຍາກອນທີ່ດີແລ້ວ, ແຕ່ການຢາກເປັນວິທະຍາກອນທີ່ຮັບປະກັນຄຸນນະພາບນັ້ນ, ການສ້າງຫຼັກສູດ ແລະ ປຶ້ມຄູ່ມືແມ່ນບັນຫາໜຶ່ງທີ່ສຳຄັນແລະຂາດບໍ່ໄດ້ໃນການພັດທະນາວິທະຍາກອນ. ອີກດ້ານໜຶ່ງ, ພະນັກງານພາຍໃນສູນຂອງສະຖາບັນຄົ້ນຄວ້ານິຕິກຳສ່ວນຫຼາຍຍັງແມ່ນພະນັກງານໜຸ່ມນ້ອຍ, ບົດຮຽນ ແລະ ປະສົບການຍັງບໍ່ທັນຫຼາຍ, ຍັງບໍ່ໄດ້ຜ່ານການເຝິກອົບຮົມການສ້າງຫຼັກສູດ ແລະ ປຶ້ມຄູ່ມືເຝິກອົບຮົມ; ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ເຝິກອົບຮົມເພື່ອຍົກສູງຂີດຄວາມສາມາດ ແລະ ໃຫ້ມີຄວາມສາມາດໃນການສ້າງຫຼັກສູດ ແລະ ປຶ້ມຄູ່ມືເຝິກອົບຮົມໄດ້ຕາມແຜນການທີ່ວາງໄວ້.

**(ນາງ ສຸມິນທາ ງາໄຊ)**

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ